# ທະນາຄານ ບີໄອຊີ ລາວ ຈຳກັດ

ເອກະສານລາຍງານການເງິນ

ວັນທີ 31 ທັນ-ວາ 2019

ທະນາຄານ ບີໄອຊີ

BIC BANK

# ສາລະບານ

| | | |
|---|---|---|
| 1 | ຂໍ້ມູນທົ່ວໄປກ່ຽວກັບທະນາຄານ | 1 |
| 2 | ຄວາມຮັບຜິດຊອບຂອງຄະນະຜູ້ບໍລິຫານຕໍ່ເອກະສານລາຍງານການເງິນ | 2-3 |
| 3 | ບົດລາຍງານຂອງຜູ້ກວດສອບອິດສະລະ | 4-6 |
| 4 | ໃບລາຍງານຖານະການເງິນ | 7 |
| 5 | ໃບລາຍງານຜົນການດຳເນີນງານ | 8-9 |
| 6 | ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ | 10 |
| 7 | ໃບລາຍງານກະແສເງິນສົດ | 11-12 |
| 8 | ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ | 13-41 |

ທະນາຄານ ບີໄອຊີ
BIC BANK

# ຂໍ້ມູນທົ່ວໄປກ່ຽວກັບທະນາຄານ

| | | | |
|---|---|---|---|
| **ທະນາຄານ** | ທະນາຄານ ບີໄອຊີ ລາວ ຈຳກັດ | | |
| **ໃບອະນຸຍາດ ການລົງທຶນ ຕ່າງປະເທດ** | ເລກທີ 033-08/ຜກທ, ລົງວັນທີ 17 ມີນາ 2008 | | |
| **ໃບທະບຽນ ວິສາຫະກິດ** | ເລກທີ 0554/ຈທວ, ລົງວັນທີ 22 ມີຖຸນາ 2017<br>ໃບອະນຸຍາດດຳເນີນທຸລະກິດທະນາຄານເລກທີ 48/ທຫລ. ລົງວັນທີ 02 ຕຸລາ 2008.<br>ໃບອະນຸຍາດດຳເນີນທຸລະກິດທະນາຄານສະບັບປັບປຸງເລກທີ 23/ທຫລ ລົງວັນທີ 08 ພະຈິກ 2017. | | |
| **ຄະນະຜູ້ອຳນວຍການ** | ທ່ານ ນາງ ກິ່ງໂພເງິນ ພູມມະສັກ | ປະທານ | ເລີ່ມແຕ່ ວັນທີ 29 ທັນວາ 2015 |
| | ທ່ານ ໂກມິນຈັນ ເພັດອາຊາ | ສະມາຊິກ | ເລີ່ມແຕ່ ວັນທີ 29 ທັນວາ 2015 |
| | ທ່ານ ອັງຄານສະດາ ມ່ວງຄຳ | ສະມາຊິກ | ເລີ່ມແຕ່ ວັນທີ 29 ທັນວາ 2015 |
| | ທ່ານ ຣັດສະລານ ມູນສານ | ສະມາຊິກ | ເລີ່ມແຕ່ ວັນທີ 27 ມີຖຸນາ 2018 |
| | ທ່ານ ລິມ ໄວ ຣຸ່ງ | ສະມາຊິກ | ເລີ່ມແຕ່ ວັນທີ 15 ກໍລະກົດ 2019 |
| | ທ່ານ ຊູກີຟລີ ບິນ ອັບດຸນລາ | ສະມາຊິກ | ເຖິງວັນທີ 15 ກໍລະກົດ 2019 |
| **ຄະນະຜູ້ບໍລິຫານ** | ທ່ານ ລິມ ໄວ ຣຸ່ງ | ຜູ້ອຳນວຍການໃຫຍ່ | ເລີ່ມແຕ່ ວັນທີ 1 ເມສາ 2019 |
| | ທ່ານ ຊູກີຟລີ ບິນ ອັບດຸນລາ | ຜູ້ອຳນວຍການໃຫຍ່ | ເຖິງວັນທີ 31 ມີນາ 2019 |
| | ທ່ານ ຣັດສະລານ ມູນສານ | ຜູ້ອຳນວຍການຝ່າຍ ປະຕິບັດການ | ເລີ່ມແຕ່ ວັນທີ 25 ມີຖຸນາ 2018 |
| | ທ່ານ ຟີຣິກ ເດັສມອນ ຟຣານຊິດ | ຜູ້ຊ່ວຍຜູ້ຈັດການທົ່ວໄປ | ເລີ່ມແຕ່ ວັນທີ 19 ມີນາ 2019 |
| | ທ່ານ ວໍລະເດດ ພັນເພັງດີ | ຜູ້ຈັດການທົ່ວໄປ | ເຖິງວັນທີ ວັນທີ 30 ມີຖຸນາ 2019 |
| **ຄະນະກຳມະການ ກວດສອບ ແລະ ບໍລິຫານຄວາມສ່ຽງ** | ທ່ານ ໂກມິນຈັນ ເພັດອາຊາ | ປະທານ | ເລີ່ມແຕ່ ວັນທີ 29 ທັນວາ 2015 |
| | ທ່ານ ນາງ ກິ່ງໂພເງິນ ພູມມະສັກ | ສະມາຊິກ | ເລີ່ມແຕ່ ວັນທີ 29 ທັນວາ 2015 |
| | ທ່ານ ບຸນມີ ພັນໂນລາດ | ສະມາຊິກ | ເລີ່ມແຕ່ ວັນທີ 3 ມີນາ 2018 |
| | ທ່ານ ໂຈເຊັບ ໂສໂລມິນຣອນ | ສະມາຊິກ | ເຖິງ ວັນທີ 27 ມີຖຸນາ 2018 |
| **ທີ່ຕັ້ງສຳນັກງານ** | ທະນາຄານ ບີໄອຊີ ລາວ ຈຳກັດ<br>127/07 ຖະໜົນ ຫັດສະດີ, ບ້ານ ຫັດສະດີໃຕ້<br>ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ | | |
| **ຜູ້ກວດສອບ ອິດສະລະ** | ບໍລິສັດ ເຄພີເອັມຈີ ລາວ ຈຳກັດຊັ້ນ 10,<br>ອາຄານໂຮໂຢລສະແຄລຖະໜົນ ສາມແສນໄທ,<br>ບ້ານ ໜອງດ້ວງເໜືອ, ເມືອງ ສີໂຄດຕະບອງ,<br>ຕູ້ ປ.ນ 6978  ນະຄອນຫຼວງວຽງຈັນ, ສປປ ລາວ<br>ໂທລະສັບ: +856 (21) 454240-7 | | |

# ຄວາມຮັບຜິດຊອບຂອງ ຄະນະບໍລິຫານ ຕໍ່ເອກະສານລາຍງານການເງິນ

ຄະນະຜູ້ບໍລິຫານ ທະນາຄານ ບີໄອຊີ ລາວ ຈຳກັດ (“ທະນາຄານ”), ຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນເພື່ອເປັນການຮັບປະກັນວ່າ ເອກະສານລາຍງານການເງິນນຳສະເໜີຢ່າງຖືກຕ້ອງບົນພື້ນຖານຄວາມສ່ຽງທີ່ຖືກຍອມຮັບໄດ້ ຂອງຖານະການເງິນໃນວັນທີ 31 ທັນວາ 2019 ຂອງທະນາຄານ, ໃບລາຍງານຜົນການດຳເນີນງານ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ຄັງສຳຮອງອື່ນໆ ແລະ ໃບລາຍງານກະແສເງິນສົດສຳລັບປີສິ້ນສຸດວັນທີດັ່ງກ່າວແມ່ນສອດຄ່ອງກັບລະບຽບການບັນຊີຂອງ ທະນາຄານ ແຫ່ງ ສປປ ລາວ ແລະ ຫຼັກການບັນຊີໃນ ສປປ ລາວ. ໃນການກະກຽມເອກະສານລາຍງານການເງິນຄະນະຜູ້ບໍລິຫານຂອງທະນາຄານຕ້ອງໄດ້ປະຕິບັດດັ່ງນີ້:

i) ນຳໃຊ້ນະໂຍບາຍການບັນຊີທີ່ເໝາະສົມພ້ອມເອກະສານປະກອບຢ່າງສົມເຫດສົມຜົນ. ພ້ອມການຕັດສິນຄາດຄະເນຢ່າງຮອບຄອບ ແລະ ພ້ອມນຳມາປະຕິບັດຢ່າງຕໍ່ເນື່ອງ;

ii) ສອດຄ່ອງກັບລະບຽບການບັນຊີຂອງທະນາຄານ ແຫ່ງ ສປປ ລາວ ແລະ ຫຼັກການບັນຊີໃນ ສປປ ລາວ, ໃນກໍລະນີຫາກມີຄວາມແຕກຕ່າງທາງດ້ານຜົນປະໂຫຍດໃນການນຳສະເໜີຕາມຄວາມເປັນຈິງ ຕ້ອງຮັບປະກັນວ່າເອກະສານລາຍງານເຫຼົ່ານີ້ໄດ້ເປີດເຜີຍຂໍ້ມູນຢ່າງເໝາະສົມ, ພ້ອມອະທິບາຍໃຫ້ເຫດຜົນຕົວຈິງ ທີ່ສົມເຫດສົມຜົນໃນເອກະສານລາຍງານການເງິນ;

iii) ເກັບຮັກສາເອກະສານດ້ານການບັນທຶກບັນຊີຢ່າງຄົບຖ້ວນ ແລະ ມີລະບົບຄຸ້ມຄອງພາຍໃນອົງກອນຢ່າງມີປະສິດທິພາບ;

iv) ປະຕິບັດຂັ້ນຕອນທີ່ສົມເຫດສົມຜົນເພື່ອຄວາມປອດໄພຂອງຊັບສິນຂອງທະນາຄານເພື່ອປົກປ້ອງ ແລະ ປ້ອງກັນການສໍ້ໂກງ. ຂໍ້ຜິດພາດ ແລະ ຂໍ້ຜິດພາດປົກກະຕິອື່ນໆ;

v) ກະກຽມເອກະສານລາຍງານການເງິນ ບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ທາງທະນາຄານຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າບໍ່ເໝາະສົມທີ່ທາງທະນາຄານຈະດຳເນີນງານຕໍ່ໄປໃນອະນາຄົດ; ແລະ

vi) ຄຸ້ມຄອງ ແລະ ຊີ້ນຳທະນາຄານຢ່າງມີປະສິດທິພາບ, ມີສ່ວນຮ່ວມໃນການຕັດສິນໃຈຕໍ່ບັນຫາສຳຄັນ ທີ່ອາດມີຜົນກະທົບຕໍ່ການດຳເນີນງານຂອງທະນາຄານ ແລະ ຜົນດຳເນີນງານ ແລະ ທະນາຄານຄວນສະແດງ ໃຫ້ເຫັນວ່າຜົນຂອງການຕັດສິນໃຈດັ່ງກ່າວນັ້ນແມ່ນສາມາດເຫັນຜົນໄດ້ໃນເອກະສານລາຍງານການເງິນຂອງທະນາຄານ.

ຄະນະບໍລິຫານໄດ້ຢັ້ງຢືນວ່າ ທາງສະພາບໍລິຫານໄດ້ປະຕິບັດຕາມເງື່ອນໄຂ ທີ່ກ່າວມາຂ້າງເທິງຢ່າງຄົບຖ້ວນ ໃນການກະກຽມ ເອກະສານລາຍງານການເງິນ.

# ການອະນຸມັດເອກະສານລາຍງານການເງິນ

ຂ້າພະເຈົ້າ ທ່ານ ລິມ ໄວ ຮຸ່ງ, ໂດຍຕາງໜ້າຄະນະຜູ້ບໍລິຫານທະນາຄານ ບີໄອຊີລາວ ຈຳກັດ ຢັ້ງຢືນວ່າ ເອກະສານລາຍງານການເງິນ ແຕ່ໜ້າ  04 ຫາ 39 ໄດ້ນຳສະເໜີຢ່າງຖືກຕ້ອງບົນພື້ນຖານຄວາມສ່ຽງທີ່ຖືກຍອມຮັບໄດ້ຂອງຖານະການເງິນຂອງທະນາຄານໃນວັນທີ 31 ທັນວາ 2019 ແລະ ໃບລາຍງານຜົນການດຳເນີນງານ. ໃບລາຍງານສ່ວນປ່ຽນແປງຂອງທຶນເຈົ້າຂອງ ແລະ ກະແສເງິນສົດສຳລັບປີສິ້ນສຸດວັນທີດັ່ງກ່າວ ແມ່ນຖືກຕ້ອງຕາມລະບຽບຫຼັກການບັນຊີຂອງທະນາຄານ ແຫ່ງ ສປປ ລາວ ແລະ ຫຼັກການບັນຊີໃນ ສປປ ລາວ.

ເຊັນຕາງໜ້າ ຄະນະບໍລິຫານ




ທ່ານ ລິມ ໄວ ຮຸ່ງ
ຜູ້ອຳນວຍການໃຫຍ່
31 ມີນາ 2020

KPMG Lao Co., Ltd.
10th Floor, Royal Square Office Building,
Samsenthai Road, Nongduong Nua Village,
Sikhotabong District, P.O. Box 6978,
Vientiane, Lao PDR
Tel +856 (21) 454240-7

ບໍລິສັດ ເຄພີເອັມຈີລາວ ຈຳກັດ
ຊັ້ນ 10, ອາຄານ ໂຣໂຢລສະແຄລ
ຖະໜົນ ສາມແສນໄທ, ບ້ານ ໜອງດ້ວງເໜືອ,
ເມືອງ ສີໂຄດຕະບອງ, ຕູ້ ປ.ນ. 6978,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ : +856 (21) 454240-7

# ບົດລາຍງານຂອງຜູ້ກວດສອບອິດສະລະ

**ເຖິງ: ຜູ້ຖືຮຸ້ນຂອງ**

**ທະນາຄານ ບີໄອຊີ ລາວ ຈຳກັດ**

*ຄຳເຫັນ*

ພວກຂ້າພະເຈົ້າ ໄດ້ດຳເນີນກວດສອບເອກະສານລາຍງານການເງິນຂອງ ທະນາຄານ ບີໄອຊີ ລາວ ຈຳກັດ ເຊິ່ງປະກອບດ້ວຍ ໃບລາຍງານຖານະການເງິນ ໃນວັນທີ 31 ທັນວາ 2019 ແລະ ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດສຳລັບປີສິ້ນສຸດວັນທີດັ່ງກ່າວ ແລະ ບົດອະທິບາຍຊ້ອນທ້າຍ, ສັງລວມນະໂຍບາຍການບັນຊີທີ່ສຳຄັນ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ.

ການສະແດງຄວາມຄິດເຫັນຂອງພວກຂ້າພະເຈົ້າ ເອກະສານລາຍງານການເງິນແມ່ນໄດ້ສະເໜີຢ່າງຖືກຕ້ອງຕາມພື້ນຖານຄວມສ່ຽງທີ່ຖືກຍອມຮັບໄດ້ຂອງຖານະການເງິນຂອງທະນາຄານໃນວັນທີ 31 ທັນວາ 2019, ຜົນການດຳເນີນງານ ແລະ ກະແສເງິນສົດສຳລັບປີສິ້ນສຸດວັນທີ່ດັ່ງກາວ ໂດຍສອດຄ່ອງຕາມລະບຽບຫຼັກການບັນຊີຂອງທະນາຄານ ແຫ່ງ ສປປ ລາວ ແລະ ຫຼັກການບັນຊີໃນ ສປປ ລາວ.

*ພື້ນຖານການອອກຄຳເຫັນ*

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບ ຕາມມາດຕະຖານການກວດສອບບັນຊີສາກົນ ("ISAs"). ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າ ໄດ້ກ່າວໄວ້ໃນສ່ວນຂອງ *ຄວາມຮັບຜິດຊອບຂອງຜູ້ກວດສອບຕໍ່ເອກະສານລາຍງານຖານະການເງິນ* ໃນການລາຍງານຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າມີຄວາມເປັນອິດສະລະຕໍ່ທະນາຄານຕາມຂໍ້ກຳນົດຈັນຍາບັນທີ່ກຳນົດໃນສ່ວນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນ ແລະ ພວກຂ້າພະເຈົ້າໄດ້ປະຕິບັດຕາມຄວາມຮັບຜິດຊອບດ້ານຈັນຍາບັນອື່ນໆເຊິ່ງເປັນໄປຕາມຂໍ້ກຳນົດເຫຼົ່ານັ້ນ.

ພວກຂ້າພະເຈົ້າເຊື່ອວ່າ ຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບພຽງພໍ ແລະ ເໝາະສົມເພື່ອໃຊ້ເປັນພື້ນຖານໃນການສະແດງຄຳເຫັນຂອງພວກຂ້າພະເຈົ້າ.



KPMG Lao Co., Ltd. a Company licensed under the Foreign Investment Law of Lao PDR, is a member of KPMG International, a Swiss cooperative.

ທະນາຄານ ບີໄອຊີ
BIC BANK

*ຄວາມຮັບຜິດຊອບຂອງຜູ້ບໍລິຫານຕໍ່ເອກະສານລາຍງານການເງິນ*

ຜູ້ບໍລິຫານມີໜ້າທີ່ຮັບຜິດຊອບໃນການກະກຽມ ແລະ ນໍາສະເໜີເອກະສານລາຍງານການເງິນທີ່ຖືກຕ້ອງຕາມລະບຽບຫຼັກການບັນຊີຂອງ ທະນາຄານແຫ່ງ ສປປ ລາວ ແລະ ຫຼັກການບັນຊີໃນ ສປປ ລາວ ແລະ ສໍາລັບການຄວບຄຸມພາຍໃນ ລວມທັງການບໍລິຫານຈັດການທີ່ມີຄວາມຈໍາເປັນເພື່ອຮັບປະກັນວ່າ ການກະກຽມເອກະສານລາຍງານການເງິນບໍ່ມີຂໍ້ຜິດພາດອັນໃຫຍ່ຫຼວງ, ການສໍ້ໂກງ ແລະ ຂໍ້ຜິດພາດອື່ນໆ.

ໃນການກະກຽມເອກະສານລາຍງານການເງິນ ຜູ້ບໍລິຫານມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດ ຂອງທະນາຄານໃນການດໍາເນີນງານຕໍ່ເນື່ອງ, ການເປີດເຜີຍ, ຕາມຄວາມເໝາະສົມ, ເລື່ອງທີ່ກ່ຽວກັບການດໍາເນີນງານຕໍ່ເນື່ອງ ແລະ ຫຼັກການບັນຊີແບບຕໍ່ເນື່ອງ ເວັ້ນເສຍແຕ່ຜູ້ບໍລິຫານມີຈຸດປະສົງທີ່ຈະເລີກ ຫຼື ຢຸດການດໍາເນີນງານ ຫຼື ບໍ່ສາມາດດໍາເນີນງານຕໍ່ເນື່ອງໄປໄດ້.

*ຄວາມຮັບຜິດຊອບຂອງຜູ້ກວດສອບອິດສະລະຕໍ່ການກວດສອບເອກະສານລາຍງານການເງິນ*

ການກວດສອບຂອງພວກຂ້າພະເຈົ້າແມ່ນມີຈຸດປະສົງ ເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າ ເອກະ ສານລາຍງານການເງິນ ໂດຍລວມແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ ທີ່ທັງເກີດການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ເພື່ອອອກບົດລາຍງານຂອງຜູ້ກວດສອບລວມທັງຄໍາເຫັນຂອງພວກຂ້າພະເຈົ້າ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນຄືຄວາມເຊື່ອໝັ້ນໃນລະດັບສູງແຕ່ບໍ່ໄດ້ເປັນການຮັບປະກັນວ່າ ການດໍາເນີນການກວດສອບຕາມມາດຕະຖານສາກົນດ້ານການກວດສອບ ຈະສາມາດກວດສອບຂໍ້ຜິດພາດອັນໃຫຍ່ຫຼວງ ທີ່ມີຢູ່ຂໍ້ຜິດພາດອາດເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ຖືວ່າມີຜົນກະທົບຫຼາຍເປັນລາຍການຍ່ອຍ ຫຼື ຫຼາຍລາຍການລວມກັນ. ພວກມັນອາດມີຜົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ໃຊ້ເປັນພື້ນຖານຂອງເອກະສານລາຍງານການເງິນເຫຼົ່ານີ້.

ໃນສ່ວນການກວດສອບຕາມ ISAs, ພວກຂ້າພະເຈົ້າໄດ້ໃຊ້ການພິຈາລະນາທາງດ້ານວິຊາຊີບ ແລະ ສົງໄສຢ່າງຜູ້ປະກອບວິຊາຊີບຕະຫຼອດການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກໍານົດ ແລະ ປະເມີນຄວາມສ່ຽງຂໍ້ຜິດພາດທີ່ມີສາລະສໍາຄັນຂອງເອກະສານລາຍງານການເງິນວ່າ ຈະເກີດຈາກການສໍ້ໂກງຫຼືຂໍ້ຜິດພາດ, ໃນການອອກແບບ ແລະ ປະຕິບັດຕາມຂັ້ນຂອງການກວດສອບ ເພື່ອຮັບມືກັບຄວາມສ່ຽງເຫຼົ່ານັ້ນ ແລະ ໄດ້ຮັບຫຼັກຖານໃນການກວດສອບບັນຊີທີ່ພຽງພໍ ແລະ ເໝາະສົມເພື່ອເປັນເກນໃນການສະແດງຄໍາເຫັນຂອງພວກຂ້າພະເຈົ້າ. ຄວາມສ່ຽງທີ່ກວດສອບບໍ່ພົບຂໍ້ຜິດພາດທີ່ເກີດຈາກການສໍ້ໂກງສູງກວ່າຂໍ້ຜິດພາດທີ່ເນື່ອງມາຈາກ ການສໍ້ໂກງອາດຈະກ່ຽວກັບການສົມຮູ້ຮ່ວມຄິດການປອມແປງເອກະສານຫຼັກຖານ, ລະເລີຍໂດຍເຈດຕະນາ, ບິດເບືອນຈາກຄວາມຈິງ ຫຼື ການແຊກແຊງການຄວບຄຸມພາຍໃນ.
- ທໍາຄວາມເຂົ້າໃຈຂອງການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບໃນການອອກແບບຂັ້ນຕອນການກວດສອບທີ່ມີຄວາມເໝາະສົມຕາມສະຖານະການ. ແຕ່ບໍ່ແມ່ນສໍາລັບຈຸດປະສົງຂອງການສະແດງຄໍາເຫັນກ່ຽວກັບປະສິດທິຜົນຂອງການຄວບຄຸມພາຍໃນຂອງທະນາຄານໄດ້.



ທະນາຄານ ບີໄອຊີ
BIC BANK

KPMG Lao Co., Ltd. a Company licensed under the Foreign Investment Law of Lao PDR, is a member of KPMG International, a Swiss cooperative

- ປະເມີນຄວາມເໝາະສົມຂອງນະໂຍບາຍການບັນຊີການນໍາໃຊ້ແລະຄວາມສົມເຫດສົມຜົນຂອງການປະເມີນການບັນຊີ ແລະ ເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງທີ່ເຮັດໂດຍຜູ້ບໍລິຫານ.

- ສະຫຼຸບກ່ຽວກັບຄວາມເໝາະສົມ ຂອງຫຼັກການບັນຊີທີ່ນໍາໃຊ້ສໍາລັບການດໍາເນີນງານຕໍ່ເນື່ອງຂອງຜູ້ບໍລິຫານ ແລະ ຈາກຫຼັກຖານການກວດສອບທີ່ໄດ້ຮັບ. ສະຫຼຸບວ່າ ມີຄວາມບໍ່ແນ່ນອນອັນສໍາຄັນກ່ຽວກັບເຫດການ ຫຼື ສະຖານະການທີ່ອາດເປັນເຫດໃຫ້ເກີດຂໍ້ສົງໄສຢ່າງອັນສໍາຄັນຕໍ່ຄວາມສາມາດຂອງທະນາຄານໃນການດໍາເນີນງານຕໍ່ເນື່ອງ. ຖ້າຫາກວ່າ ພວກຂ້າພະເຈົ້າໄດ້ຂໍ້ສະຫຼຸບວ່າ ມີຄວາມບໍ່ແນ່ນອນອັນສໍາຄັນ. ພວກຂ້າພະເຈົ້າຕ້ອງໄດ້ກ່າວໄວ້ໃນບົດລາຍງານຂອງຜູ້ກວດສອບອິດສະລະ ເຖິງການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນຫຼືຖ້າການເປີດເຜີຍດັ່ງກ່າວບໍ່ພຽງພໍຕໍ່ຄໍາເຫັນຂອງພວກຂ້າພະເຈົ້າຈະປ່ຽນໄປ. ພວກຂ້າພະເຈົ້າສະຫຼຸບແມ່ນອີງໃສ່ຫຼັກຖານການກວດສອບທີ່ໄດ້ຮັບເຖິງວັນທີຂອງບົດລາຍງານຜູ້ກວດສອບ. ຢ່າງໃດກໍ່ຕາມ, ເຫດການ ຫຼື ເງື່ອນໄຂໃນອະນາຄົດອາດຈະເຮັດໃຫ້ທະນາຄານຢຸດການດໍາເນີນງານແບບຕໍ່ເນື່ອງ.

- ປະເມີນການນໍາສະເໜີໂດຍລວມ, ໂຄງສ້າງ ແລະ ເນື້ອໃນຂອງເອກະສານລາຍງານການເງິນ ລວມທັງການເປີດເຜີຍຂໍ້ມູນ ແລະ ການນໍາສະເໜີເອກະສານລາຍງານການເງິນການສະແດງລາຍການ ແລະ ເຫດການໃນຮູບແບບທີ່ເຮັດໃຫ້ມີການນໍາສະເໜີຂໍ້ມູນໂດຍຖືກຕ້ອງຕາມທີ່ຄວນ.

- ພວກຂ້າພະເຈົ້າຕິດຕໍ່ກັບຜູ້ທີ່ມີໜ້າທີ່ໃນການກໍາກັບດູແລກ່ຽວກັບຂອບເຂດ ແລະ ໄລຍະເວລາໃນການກວດສອບຕາມທີ່ໄດ້ວາງແຜນໄວ້ປະເດັນທີ່ສໍາຄັນ ລວມເຖິງຂໍ້ບົກພ່ອງທີ່ສໍາຄັນໃນລະບົບ ການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າອາດກວດພົບໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

ບໍລິສັດ ເຄພີເອັມຈີ ລາວ ຈໍາກັດ
ນະຄອນຫຼວງວຽງຈັນ, ສປປ ລາວ
31 ມີນາ 2020



ທະນາຄານ ບີໄອຊີ
BIC BANK

KPMG Lao Co., Ltd. a Company licensed under the Foreign Investment Law of Lao PDR, is a member of KPMG International, a Swiss cooperative.

| | ໝາຍເຫດ | ວັນທີ 31 ທັນວາ (ລ້ານກີບ) 2019 | 2018 |
|---|---|---|---|
| **ຊັບສິນ** | | | |
| ເງິນສົດ ແລະ ທຽບເທົ່າເງິນສົດ | 4 | 304.776 | 580.052 |
| ເງິນຝາກຕາມລະບຽບການກັບທະນາຄານແຫ່ງ ສປປ ລາວ | 5 | 132.250 | 222.619 |
| ເງິນລົງທຶນ | 6 | 516 | 50.347 |
| ເງິນໃຫ້ກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ, ຫຼັງຫັກເງິນແຮສະເພາະ | 7 | 1.444.632 | 1.093.377 |
| ຊັບສົມບັດຄົງທີ່ມີຕົວຕົນ | 8 | 29.210 | 5.869 |
| ຊັບສົມບັດຄົງທີ່ບໍ່ມີຕົວຕົນ | 9 | 48.404 | 3.429 |
| ຊັບສິນອື່ນໆ | 10 | 398.755 | 68.892 |
| **ລວມຊັບສິນ** | | **2.358.543** | **2.024.585** |
| **ໜີ້ສິນ, ທຶນ ແລະ ຄັງສຳຮອງ** | | | |
| **ໜີ້ສິນ** | | | |
| ເງິນຝາກຈາກລູກຄ້າ | 11 | 1.832.467 | 1.595.060 |
| ເງິນຝາກຈາກທະນາຄານອື່ນ | 12 | 166.512 | 35.264 |
| ໜີ້ສິນອື່ນໆ | 13 | 29.902 | 52.214 |
| **ລວມໜີ້ສິນ** | | **2.028.881** | **1.682.538** |
| **ທຶນ ແລະ ຄັງສຳຮອງອື່ນໆ** | | | |
| ທຶນຈົດທະບຽນຖອກແລ້ວ | 14 | 300.000 | 300.000 |
| ຄັງສຳຮອງຕາມກົດໝາຍ | 15 | 10.234 | 10.049 |
| ກຳໄລສະສົມ | | 12.690 | 27.216 |
| ເງິນແຮລວມສຳລັບກິດຈະກຳສິນເຊື່ອ | 16 | 6.738 | 4.782 |
| **ລວມທຶນ ແລະ ຄັງສຳຮອງອື່ນໆ** | | **329.662** | **342.047** |
| **ລວມໜີ້ສິນ, ທຶນ ແລະ ຄັງສຳຮອງອື່ນໆ** | | **2.358.543** | **2.024.585** |

ບົດອະທິບາຍປະກອບເອກະສານລາຍງານການເງິນ ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນສະບັບນີ້

| | ໝາຍ ເຫດ | ສຳລັບປີສິ້ນສຸດ ວັນທີ 31 ທັນວາ (ລ້ານກີບ) 2019 | 2018 |
|---|---|---|---|
| **ລາຍຮັບດອກເບ້ຍ** | | | |
| ດອກເບ້ຍເງິນກູ້ ແລະ ເງິນລ່ວງໜ້າ | | 98.783 | 95.117 |
| ດອກເບ້ຍຈາກທຸລະກຳລະຫວ່າງທະນາຄານ | | 4 | 1 |
| ລາຍຮັບດອກເບ້ຍຈາກການລົງທຶນໃນພັນທະບັດ | | 545 | 972 |
| **ລວມລາຍຮັບດອກເບ້ຍ** | | **99.332** | 96.090 |
| **ລາຍຈ່າຍດອກເບ້ຍ** | | | |
| ດອກເບ້ຍເງິນຝາກ | | (67.500) | (55.973) |
| ດອກເບ້ຍຈາກທຸລະກຳລະຫວ່າງທະນາຄານ | | (2.540) | (1.671) |
| **ລວມລາຍຈ່າຍດອກເບ້ຍ** | | **(70.040)** | **(57.644)** |
| **ລາຍຮັບສຸດທິດອກເບ້ຍ** | | **29.292** | **38.446** |
| **ລາຍຮັບອື່ນໆ** | | | |
| ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ | | 55.085 | 10.584 |
| ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ | | (2.105) | (297) |
| **ລາຍຮັບສຸດທິຄ່າທຳນຽມ ແລະ ຄ່າບໍລິການ** | 17 | **52.980** | **10.287** |
| ຂາດທຶນຈາກການແລກປ່ຽນເງິນຕາຕ່າງປະເທດ | | (1.272) | (42) |
| ລາຍຮັບອື່ນໆ | 18 | 5.705 | 10.848 |
| **ລວມລາຍຮັບອື່ນໆ** | | **57.413** | **21.093** |
| **ລາຍຮັບກ່ອນຫັກລາຍຈ່າຍດອກເບ້ຍ, ໜີ້ສົງໄສຈະສູນ ແລະ ລາຍຈ່າຍອາກອນກຳໄລ** | | **86.705** | **59.539** |

ບົດອະທິບາຍປະກອບເອກະສານລາຍງານການເງິນ ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນສະບັບນີ້

| | ໝາຍ ເຫດ | ສຳລັບປີສິ້ນສຸດ ວັນທີ 31 ທັນວາ *(ລ້ານກີບ)* 2019 | 2018 |
|---|---|---|---|
| **ລາຍຈ່າຍດຳເນີນງານ** | | | |
| ລາຍຈ່າຍພະນັກງານ | | (12.654) | (12.881) |
| ລາຍຈ່າຄ່າຫຼູ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | | (4.669) | (1.972) |
| ລາຍຈ່າຍອື່ນໆ | 19 | (18.974) | (13.107) |
| **ເງິນແຮສະເພາະສຸດທິ** | | **(47.962)** | **(4.939)** |
| ລາຍຈ່າຍເງິນແຮສະເພາະ | | (92.752) | (48.763) |
| ເກັບຄືນເງິນແຮສະເພາະ | | 44.790 | 43.824 |
| **ລວມລາຍຈ່າຍການດຳເນີນງານ** | | **(84.259)** | **(32.899)** |
| **ກຳໄລກ່ອນຫັກອາກອນ** | | **2.446** | **26.640** |
| ລາຍຈ່າຍອາກອນກຳໄລ | 20 | (591) | (6.395) |
| **ກຳໄລໃນປີ** | | **1.855** | **20.245** |

ບົດອະທິບາຍປະກອບເອກະສານລາຍງານການເງິນ ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນສະບັບນີ້

| | ໝາຍເຫດ | ທຶນຈົດທະບຽນຂອງທະນາຄານ (ລ້ານກີບ) | ຄັງສຳຮອງຕາມກົດໝາຍ (ລ້ານກີບ) | ກຳໄລສະສົມ (ລ້ານກີບ) | ເງິນແຮລວມສຳລັບສິນເຊື່ອ (ລ້ານກີບ) | ລວມ (ລ້ານກີບ) |
|---|---|---|---|---|---|---|
| **ຍອດເຫຼືອໃນວັນທີ 1 ມັງກອນ 2018** | | 300.000 | 8.025 | 24.285 | 12.204 | 344.514 |
| ກຳໄລໃນປີ | | - | - | 20.245 | - | 20.245 |
| ໂອນເຂົ້າຄັງສຳຮອງຕາມກົດໝາຍ | | - | 2.024 | (2.024) | - | - |
| ຫັກເຂົ້າເງິນແຮລວມພາຍໃນປີ | | - | - | - | 4.883 | 4.883 |
| ເກັບຄືນເງິນແຮລວມພາຍໃນປີ | | - | - | - | (9.874) | (9.874) |
| ການຈັດປະເພດໃໝ່ຂອງເງິນແຮລວມເປັນເງິນແຮສະເພາະ | | - | - | - | (2.578) | (2.578) |
| ເງິນປັນໃຫ້ຜູ້ຖືຮຸ້ນ | 14 | - | - | (15.243) | - | (15.243) |
| ສ່ວນທີ່ຫຼຸດລົງອື່ນໆ | | - | - | (47) | - | (47) |
| ຜົດດ່ຽງຈາກການຕີມູນຄ່າເງິນຕາຕ່າງປະເທດ | | - | - | - | 147 | 147 |
| **ຍອດເຫຼືອໃນວັນທີ 31 ທັນວາ 2018 ແລະ ວັນທີ 1 ມັງກອນ 2019** | | 300.000 | 10.049 | 27.216 | 4.782 | 342.047 |
| ກຳໄລໃນປີ | | - | - | 1.855 | - | 1.855 |
| ໂອນເຂົ້າຄັງສຳຮອງຕາມກົດໝາຍ | | - | 185 | (185) | - | - |
| ຫັກເຂົ້າເງິນແຮລວມພາຍໃນປີ | | - | - | - | 4.784 | 4.784 |
| ເກັບຄືນເງິນແຮລວມພາຍໃນປີ | 14 | - | - | - | (3.011) | (3.011) |
| ເງິນປັນໃຫ້ຜູ້ຖືຮຸ້ນ | | - | - | (16.196) | - | (16.196) |
| ຜົດດ່ຽງຈາກການຕີມູນຄ່າເງິນຕາຕ່າງປະເທດ | | - | - | - | 183 | 183 |
| **ຍອດເຫຼືອໃນວັນທີ 31 ທັນວາ 2019** | | 300.000 | 10.234 | 12.690 | 6.738 | 329.662 |

ບົດອະທິບາຍປະກອບເອກະສານລາຍງານການເງິນ ເປັນສ່ວນໜຶ່ງຂອງເອກະສານລາຍງານສະບັບນີ້

ສຳລັບປີສິ້ນສຸດ ວັນທີ 31 ທັນວາ

| | *ບົດອະທິບາຍ* | *(ລ້ານກີບ)* 2019 | 2018 |
|---|---|---|---|
| **ກະແສເງິນສົດຈາກການດຳເນີນງານ** | | | |
| **ກຳໄລກ່ອນຫັກອາກອນກຳໄລ** | | 2.446 | 26.640 |
| ດັດແກ້ສຳລັບ: | | | |
| ລາຍຮັບດອກເບ້ຍ | | (99.332) | (96.090) |
| ລາຍຈ່າຍດອກເບ້ຍ | | 70.040 | 57.644 |
| ລາຍຈ່າຍຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | | 4.669 | 1.972 |
| ເງິນແຮສຳລັບໜີ້ສູນຂອງເງິນກູ້ໃຫ້ລູກຄ້າ | | 97.537 | 53.647 |
| ເກັບຄືນເງິນແຮສຳລັບໜີ້ສູນຂອງເງິນກູ້ໃຫ້ລູກຄ້າ | | (47.801) | (53.698) |
| **ກະແສເງິນສົດຈາກການດຳເນີນງານກ່ອນການປ່ຽນແປງຊັບສິນ ແລະ ໜີ້ສິນ ໃນການດຳເນີນງານ** | | **27.559** | **(9.885)** |
| ການປ່ຽນແປງຊັບສິນ ແລະ ໜີ້ສິນໃນການດຳເນີນງານ | | | |
| ເງິນຝາກແຮບັງຄັບກັບ ທະນາຄານແຫ່ງ ສປປ ລາວ | | 90.369 | 26.291 |
| ເງິນໃຫ້ກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ | | (399.036) | (38.181) |
| ຊັບສິນອື່ນໆ | | (331.212) | (34.603) |
| ເງິນຝາກຈາກລູກຄ້າ | | 237.407 | 120.346 |
| ເງິນຝາກຈາກທະນາຄານອື່ນ | | 131.248 | 25.258 |
| ໜີ້ສິນອື່ນໆ | | (22.584) | 18.255 |
| ດອກເບ້ຍທີ່ຮັບ | | 100.681 | 94.902 |
| ດອກເບ້ຍທີ່ຈ່າຍ | | (64.207) | (52.384) |
| ອາກອນຈ່າຍພາຍໃນປີ | | (6.151) | (925) |
| **ເງິນສົດສຸດທິ (ທີ່ໃຊ້ໃນ) ຈາກການດຳເນີນງານ** | | **(235.926)** | **149.074** |

ບົດອະທິບາຍປະກອບເອກະສານລາຍງານການເງິນ ເປັນສ່ວນໜຶ່ງຂອງເອກະສານລາຍງານສະບັບນີ້

| | | ສຳລັບປີສິ້ນສຸດ ວັນທີ 31 ທັນວາ | |
|---|---|---|---|
| | *ບົດອະທິບາຍ* | *(ລ້ານກີບ)* | |
| | | 2019 | 2018 |
| **ກະແສເງິນສົດຈາກການລົງທຶນ** | | | |
| ການລົງທຶນໃນພັນທະບັດ | | 50.347 | (50.347) |
| ການລົງທຶນໃນວິສາຫະກິດ | | (516) | - |
| ຊື້ຊັບສິນບັດຄົງທີ່ທີ່ມີຕົວຕົນ ແລະ ຊັອບແວ | | (72.985) | (9.367) |
| ລາຍຮັບຈາກການຂາຍຊັບສິນບັດຄົງທີ່ | | - | 11 |
| **ເງິນສົດສຸດທິທີ່ໃຊ້ໃນການລົງທຶນ** | | **(23.154)** | **(59.703)** |
| **ກະແສເງິນສົດຈາກກິດຈະກຳທາງການເງິນ** | | | |
| ເງິນປັນຜົນໃຫ້ຜູ້ຖືຮຸ້ນ | | (16.196) | (15.243) |
| **ກະແສເງິນສົດສຸດທິໃຊ້ໃນກິດຈະກຳທາງການເງິນ** | | **(16.196)** | **(15.243)** |
| **ປ່ຽນແປງສຸດທິເງິນສົດ ແລະ ທຽບເທົ່າເງິນສົດ** | | (275.276) | 74.128 |
| ເງິນສົດ ແລະ ທຽບເທົ່າເງິນສົດ ໃນວັນທີ 01 ມັງກອນ | | 580.052 | 505.924 |
| **ເງິນສົດ ແລະ ທຽບເທົ່າເງິນສົດ ໃນວັນທີ 31 ທັນວາ** | | **304.776** | **580.052** |

| ໝາຍເຫດ | ສາລະບານ |
|---|---|
| 1 | ອົງກອນ ແລະ ກິດຈະກຳຫຼັກ |
| 2 | ພື້ນຖານຂອງການກະກຽມເອກະສານລາຍງານການເງິນ |
| 3 | ນະໂຍບາຍບັນຊີທີ່ສຳຄັນ |
| 4 | ເງິນສົດ ແລະ ທຽບເທົ່າເງິນສົດ |
| 5 | ເງິນຝາກແຮບັງຄັບຢູ່ທະ¬ນາ¬ຄານແຫ່ງ ສປປ ລາວ |
| 6 | ການລົງທຶນ |
| 7 | ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ, ຫຼັງຫັກເງິນແຮສະເພາະ |
| 8 | ຊັບສົມບັດຄົງທີ່ມີຕົວຕົນ |
| 9 | ຊັບສົມບັດຄົງທີ່ບໍ່ມີຕົວຕົນ |
| 10 | ຊັບສິນອື່ນໆ |
| 11 | ເງິນຝາກຈາກລູກຄ້າ |
| 12 | ເງິນຝາກຈາກທະນາຄານ |
| 13 | ໜີ້ສິນອື່ນໆ |
| 14 | ທຶນຈົດທະບຽນ |
| 15 | ຄັງສຳຮອງຕາມກົດໝາຍ |
| 16 | ເງິນແຮສຳລັບກິດຈະກຳທາງສິນເຊື່ອ |
| 17 | ລາຍຮັບສຸດທິຈາກຄ່າທຳນຽມ ແລະ ການບໍລິການ |
| 18 | ລາຍຮັບອື່ນໆ |
| 19 | ລາຍຈ່າຍອື່ນໆ |
| 20 | ລາຍຈ່າຍອາກອນກຳໄລ |
| 21 | ການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ |
| 22 | ພາລະຜູກພັນ  ແລະ ໜີ້ສິນທີ່ອາດເກີດຂຶ້ນ |
| 23 | ເຫດການພາຍຫຼັງມື້ປິດບັນຊີ |



ທະນາຄານ ບີໄອຊີ
BIC BANK

## 1. ກອນ ແລະ ກິດຈະກຳຫຼັກ

ທະນາຄານ ບີໄອຊີລາວ ຈຳກັດ (“ທະນາຄານ”) ເປັນທະນາຄານຮ່ວມທຶນ ແລະ ຈົດທະບຽນຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (“ສປປ ລາວ”). ທະນາຄານດຳເນີນງານ ພາຍໃຕ້ໃບອະນຸຍາດການລົງທຶນເລກທີ 033-08/ຜກທ ລົງວັນທີ 17 ມີນາ 2008 ເຊິ່ງອອກໂດຍ ກະຊວງແຜນການ ແລະ ການລົງທຶນ ແລະ ໃບອະນຸຍາດການດຳເນີນທຸລະກິດດ້ານການທະນາຄານ ເລກທີ 48/ທຫລ ລົງວັນທີ 2 ຕຸລາ 2008 ອອກໂດຍທະນາຄານ ແຫ່ງ ສປປ ລາວ.

ຜູ້ຖືຮຸ້ນໃນປັດຈຸບັນ ແມ່ນບໍລິສັດ ເອເຊຍ ການລົງທຶນ ແລະ ການບໍລິການທາງດ້ານການເງິນ (ຖືຮຸ້ນ 70%) ແລະ ບໍລິສັດໄຟຟ້າ ລາວ (ຖືຮຸ້ນ 30%) ຜູ່ທີ່ຄອບກິດຈະການທະນາຄານ ໂດຍການຊື້ຮຸ້ນຈາກ ບໍລິສັດ ICB Financial Group Holding AG ໃນວັນທີ 14 ທັນວາ 2015. ການຊື້ຮຸ້ນໄດ້ຮັບການອະນຸມັດໂດຍ ທະນາຄານ ແຫ່ງ ສປປ ລາວ ເພື່ອໃຫ້ສອດຄ່ອງກັບໜັງສືທາງການ ເລກທີ 1088/ທຫລ ລົງວັນທີ 29 ທັນວາ 2015.

ໃນປີ 2019, ທະນາຄານໄດ້ຮັບໃບທະບຽນວິສາຫະກິດ ສະບັບແກ້ໄຂ ເລກທີ 1576 /ຈທວ ລົງວັນທີ 12 ກັນຍາ 2019 ອອກໂດຍກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ.

ວັນທີ 31 ທັນວາ 2019 ທຶນຈົດທະບຽນຖອກແລ້ວຂອງທະນາຄານແມ່ນ 300.000 ລ້ານກີບ (ນະວັນທີ 31 ທັນວາ 2017: ທຶນຈົດທະບຽນຖອກແລ້ວຂອງທະນາຄານແມ່ນ 300.000 ລ້ານກີບ).

ກິດຈະກຳຫຼັກຂອງທະນາຄານ ແມ່ນອຳນວຍຄວາມສະດວກ ໃຫ້ບໍລິການທາງດ້ານທະນາຄານ ແລະ ໃຫ້ບໍລິການທາງດ້ານການເງິນທີ່ກ່ຽວຂ້ອງ ໃນ ສປປ ລາວ.

ໃນວັນທີ 31 ທັນວາ 2019, ທະນາຄານ ມີພະນັກງານທັງໝົດ 96 ຄົນ (2018: 79 ຄົນ).

## 2. ພື້ນຖານຂອງການກະກຽມເອກະສານລາຍງານການເງິນ

### (ກ) ພື້ນຖານການບັນຊີທົ່ວໄປ

### (i) ພື້ນຖານການກະກຽມ

ເອກະສານລາຍງານການເງິນສະບັບນີ້ ແມ່ນສະແດງເປັນສະກຸນເງິນກີບລາວ ຫຼືວໜ່ອຍ (“ລ້ານກີບ”) ຕາມດຳລັດເລກທີ 02/ນຍ ຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ລົງວັນທີ 22 ມີນາ 2000 ແລະ ກົດໝາຍ ວ່າດ້ວຍບັນຊີວິສາຫະກິດ ແຫ່ງ ສປປ ລາວ ແລະ ລະບຽບຫຼັກການບັນຊີຂອງ ທະນາຄານ ແຫ່ງ ສປປ ລາວ ແລະ ຫຼັກການບັນຊີໃນ ສປປ ລາວ.

ເອກະສານລາຍງານການເງິນ ແມ່ນຖືກກະກຽມໂດຍສອດຄ່ອງກັບລະບຽບຫຼັກການບັນຊີຂອງ ທະນາຄານ ແຫ່ງ ສປປ ລາວ ແລະ ຫຼັກການບັນຊີໃນ ສປປ ລາວ. ເຊິ່ງອາດແຕກຕ່າງຈາກມາດຕະຖານການລາຍງານການເງິນສາ-ກົນ ແລະ ຫຼັກການບັນຊີທົ່ວໄປ ແລະ ມາດຕະຖານການລາຍງານຂອງປະເທດອື່ນໆ. ສະນັ້ນ, ເອກະສານລາຍງານການເງິນ ແມ່ນບໍ່ມີຈຸດປະສົງທີ່ຈະສະແດງຖານະການເງິນ. ຜົນຂອງການດຳເນີນງານ ແລະ ສ່ວນປ່ຽນແປງທຶນເຈົ້າຂອງ. ກະແສເງິນສົດ ແລະ ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນສຳລັບປີສິ້ນສຸດ ຕາມຫຼັກການບັນຊີທີ່ຖືກຍອມຮັບທົ່ວໄປ ແລະ ການປະຕິບັດງານທົ່ວໄປໃນບັນດາປະເທດ ແລະ ຂົງເຂດອື່ນໆທີ່ນອກເໜືອ ຈາກ ສປປ ລາວ. ນອກຈາກນີ້ ເອກະສານລາຍງານການເງິນສະບັບນີ້ ແມ່ນບໍ່ໄດ້ຖືກສ້າງຂຶ້ນໃຫ້ຜູ້ທີ່ບໍ່ຮູ້ກ່ຽວກັບນະໂຍບາຍການບັນຊີ. ການດຳເນີນງານ ແລະ ການປະຕິບັດກົດໝາຍ ແລະ ຂໍ້ກຳນົດຂອງ ສປປ ລາວ.

ເອກະສານລາຍງານການເງິນ ແມ່ນຖືກອະນຸມັດໂດຍຄະນະຜູ້ບໍລິຫານ ໃນວັນທີ 31 ມີນາ 2020.

### (ii) ພື້ນຖານການປະເມີນ

ເອກະສານລາຍງານການເງິນໄດ້ກະກຽມຂຶ້ນຕາມຫຼັກການຕົ້ນທຶນເດີມ ຍົກເວັ້ນກໍລະນີທີ່ລະບຸໄວ້ໃນນະໂຍບາຍການບັນຊີ. ນະໂຍບາຍການບັນຊີທີ່ມີການນຳໃຊ້ຢ່າງຕໍ່ເນື່ອງໂດຍທະນາຄານ ແລະ ມີຄວາມສອດຄ່ອງກັບທີ່ເຄີຍໃຊ້ໃນປີກ່ອນ, ຍົກເວັ້ນທີ່ລະບຸໄວ້ເປັນຢ່າງອື່ນ.

### (iii) ການໃຊ້ປະມານການ ແລະ ການພິຈາລະນາ

ການກະກຽມເອກະສານລາຍງານການເງິນຂອງທະນາຄານ ຜູ້ບໍລິຫານຕ້ອງໃຊ້ການພິຈາລະນາ, ຄາດຄະເນ ແລະ ສົມມຸດຖານບົນພື້ນຖານຄວາມຮູ້ຄວາມເຂົ້າໃຈທີ່ດີທີ່ສຸດໃນການຈັດການຂອງເຫດການທີ່ເກີດຂຶ້ນໃນປະຈຸບັນ ແລະ ການປະຕິບັດທີ່ມີຜົນຕໍ່ການນຳໃຊ້ນະໂຍບາຍການບັນຊີ ແລະ ລາຍງານມູນຄ່າຂອງຊັບສິນ, ໜີ້ສິນ, ລາຍຮັບ, ລາຍຈ່າຍ ແລະ ການເປີດເຜີຍຂໍ້ມູນຂອງເຫດທີ່ອາດຈະເກີດຂຶ້ນໃນວັນທີ່ລາຍງານ.

ການປະເມີນ ແລະ ຂໍ້ສົມມຸດຕິຖານຈະມີການທົບທວນຢ່າງຕໍ່ເນື່ອງ, ຜົນທີ່ເກີດຂຶ້ນຈິງອາດແຕກຕ່າງຈາກການປະເມີນຂອງຜູ້ບໍລິຫານ ແລະ ຄວາມແຕກຕ່າງດັ່ງກ່າວອາດຈຳເປັນຕ້ອງມີການແກ້ໄຂຮັບຮູ້ໃນໄລຍະ ເຊິ່ງການປະມານການແມ່ນມີການທົບທວນ ແລະ ໃນອະນາຄົດທີ່ໄດ້ຮັບຜົນກະທົບ.

**(ຂ) ການເຄື່ອນໄຫວເງິນຕາຕ່າງປະເທດ**

ທະນາຄານຮັກສາລະບົບການບັນຊີ ແລະ ບັນທຶກລາຍການເຄື່ອນໄຫວທັງໝົດໃນສະກຸນເງິນເດີມ.

ສິນຊັບ ແລະ ໜີ້ສິນທາງການເງິນ ທີ່ສະແດງໃນສະກຸນເງິນຕ່າງປະເທດໃນທ້າຍປີຈະຖືກແປເປັນເງິນກີບ ໂດຍໃຊ້ອັດຕາແລກປ່ຽນໃນວັນທີຂອງໃບລາຍງານຖານະການເງິນ. ລາຍຈ່າຍ ແລະ ລາຍຮັບ ທີ່ເປັນສະກຸນເງິນຕາຕ່າງປະເທດພາຍໃນປີ ແມ່ນຈະຖືກປ່ຽນໃຫ້ເປັນເງິນກີບ ຕາມອັດຕາແລກປ່ຽນໃນວັນທີຂອງໃບລາຍງານຖານະການເງິນ. ຄວາມແຕກຕ່າງຂອງການແລກປ່ຽນເງິນຕາຕ່າງປະເທດ ທີ່ເກີດຈາກການແປຂອງຊັບສິນ ແລະ ໜີ້ສິນໃນວັນທີຂອງໃບລາຍງານຖານະການເງິນ ແມ່ນໄດ້ບັນທຶກໄວ້ໃນໃບໃນລາຍງານຜົນການດຳເນີນງານ. ລາຍການອັດຕາແລກປ່ຽນເງິນຕາຕ່າງປະເທດທີ່ກ່ຽວຂ້ອງກັບສະກຸນເງິນກີບ ໃນວັນທີ 31 ທັນວາ 2019 ທີ່ນຳສະເໜີຕໍ່ໄປນີ້:

| | 31 ທັນວາ 2019 31 | ທັນວາ 2018 |
|---|---|---|
| ໂດລາສະຫາລັດ (“USD”) | 8.839,00 | 8.512,00 |
| ບາດໄທ (“THB”) | 295,62 | 262,11 |
| ເອີໂຣ (“EUR”) | 9.882,00 | 9.750,00 |

**(ຄ) ປີການບັນຊີ**

ປີການບັນຊີຂອງທະນາຄານແມ່ນເລີ່ມແຕ່ວັນທີ 01 ມັງກອນ ແລະ ສິ້ນສຸດໃນວັນທີ 31 ທັນວາ.

## 3. ນະໂຍບາຍການບັນຊີທີ່ສຳຄັນ

ນະໂຍບາຍບັນຊີທີ່ສຳຄັນດັ່ງລຸ່ມນີ້ ທະນາຄານໄດ້ນຳໃຊ້ຢ່າງຕໍ່ເນື່ອງຕະຫຼອດໄລຍະເວລາໃນການກະກຽມເອກະສານລາຍງານການເງິນ.

**(ກ) ເຄື່ອງມືທາງດ້ານການເງິນ**

ເຄື່ອງມືທາງດ້ານການເງິນຂອງທະນາຄານປະກອບມີເງິນສົດ ແລະ ທຽບເທົ່າເງິນສົດ, ເງິນກູ້ຢືມ ແລະ ລູກໜີ້, ເງິນຝາກ, ທຸລະກຳລະຫວ່າງທະນາຄານ, ໜີ້ຕ້ອງຮັບອື່ນໆ ແລະ ໜີ້ຕ້ອງສົ່ງ. ນະໂຍບາຍການບັນຊີສຳລັບການຮັບຮູ້ ແລະ ການປະເມີນມູນຄ່າຂອງລາຍການເຫຼົ່ານີ້ ຈະຖືກສະແດງໃນນະໂຍບາຍການບັນຊີທີ່ກ່ຽວຂ້ອງ.

**(ຂ) ເງິນສົດ ແລະ ທຽບເທົ່າເງິນສົດ**

ເງິນສົດ ແລະ ທຽບເທົ່າເງິນສົດປະກອບມີ: ເງິນສົດ ແລະ ການລົງທຶນໄລຍະສັ້ນທີ່ມີສະພາບຄ່ອງສູງ ໜ້ອຍກວ່າ ຫຼື ເທົ່າກັບ 30 ວັນເຊິ່ງສາມາດປ່ຽນມາເປັນຈຳນວນເງິນສົດ ແລະ ບັນຊີລູກໜີ້ກັບທະນາຄານ ໜ້ອຍກວ່າ ຫຼື ເທົ່າ 30 ມື້.

**(ຄ) ທຸລະກຳລະຫວ່າງທະນາຄານ ແລະ ຕະຫຼາດເງິນ**

ທຸລະກຳລະຫວ່າງທະນາຄານ ແລະ ຕະຫຼາດເງິນ ແມ່ນຖືກບັນທຶກຕາມມູນຄ່າຕົ້ນທຶນ.

**(ງ) ຄັງສຳຮອງຕາມລະບຽບການ**

ພາຍໃຕ້ຂໍ້ກຳນົດຂອງກົດໝາຍວ່າດ້ວຍທະນາຄານທຸລະກິດ ລົງວັນທີ 16 ມັງກອນ 2007. ທະນາຄານທຸລະກິດຮ່ວມລົງທຶນ ຕ້ອງໄດ້ຈັດສັນເງິນແຮໃຫ້ເໝາະສົມດັ່ງນີ້:

- ຄັງສຳຮອງຕາມລະບຽບການ
- ທຶນຂະຫຍາຍທຸລະກິດ ແລະ ທຶນອື່ນໆ

ອີງຕາມກົດຫມາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ເລກທີ 46/ສພຊ ສະບັບວັນທີ 26 ທັນວາ 2013. ທະນາຄານຕ້ອງຮັກສາເງິນຄັງສຳຮອງຕາມລະບຽບການໃນອັດຕາ 10% ຂອງກຳໄລສຸດທິພາຍຫຼັງທີ່ໄດ້ຫັກຂາດທຶນສະສົມ. ເມື່ອຄັງສຳຮອງນີ້ມີເງິນສະສົມໄດ້ເຄິ່ງໜຶ່ງຂອງທຶນຈົດທະບຽນ. ທະນາຄານສາມາດໂຈະການຫັກເງິນເຂົ້າຄັງສຳຮອງດັ່ງກ່າວ.

**(ຈ) ການລົງທຶນ**

ການລົງທຶນປະກອບດ້ວຍການລົງທຶນໃນພັນທະບັດ ທີ່ອອກໂດຍກະຊວງການເງິນ ການລົງທຶນ ແມ່ນລາຍງານຕາມລາຄາໜ້າບັດ.

**(ສ) ເງິນໃຫ້ກູ້ ແລະ ເງິນລ່ວງໜ້າ**

ເງິນໃຫ້ກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ ແມ່ນມາຈາກການສະໜອງທຶນຂອງທະນາຄານໃຫ້ແກ່ລູກຄ້າເພື່ອຈຸດປະສົງໃດໜຶ່ງທີ່ນອກເໜືອຈາກການເກນກຳໄລ ໄລຍະສັ້ນ. ເງິນໃຫ້ກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າແມ່ນມາຈາກຍອດຄົງເຫຼືອຫັກລົບເງິນແຮສຳລັບໜີ້ສົງໃສ ແລະ ໜີ້ສູນ ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ, ສະທ້ອນໃຫ້ເຫັນຍອດທີ່ສາມາດຮຽກເກັບຄືນໄດ້. ເງິນໃຫ້ກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ, ຍົກເວັ້ນເງິນເບີກເກີນບັນຊີທະນາຄານ ແມ່ນຖືກສະແດງສະເພາະຂອງດອກເບ້ຍຕ້ອງຮັບ.

**(ຊ) ເງິນແຮສຳລັບໜີ້ເສຍ ແລະ ໜີ້ສົງໃສ ຂອງເງິນໃຫ້ກູ້ ແລະ ເງິນລ່ວງໜ້າ**

ຂໍ້ຕົກລົງເລກທີ 512/ທຫລ ມີຜົນບັງຄັບໃຊ້ແຕ່ວັນທີ 1 ຕຸລາ 2018

ອີງຕາມລະບຽບການ ສະບັບເລກທີ 512/ທຫລ (“ທຫລ 512”) ລົງວັນທີ 29 ມິຖຸນາ 2018 ແລະ ມີຜົນສັກສິດເລີ່ມແຕ່ວັນທີ 1 ຕຸລາ 2018 ແມ່ນຮຽກຮ້ອງໃຫ້ ທະນາຄານ ຕ້ອງໄດ້ຈັດປະເພດເງິນກູ້ ແລະ ກຳນົດເງິນແຮສຳລັບໜີ້ເສຍ ແລະ ໜີ້ສົງໄສ ເງິນກູ້ ແລະ ເງິນລ່ວງໜ້າ. ດັ່ງນັ້ນ ເງິນໃຫ້ກູ້ຈະແບ່ງອອກເປັນເງິນໃຫ້ກູ້ ທີ່ເກີດດອກອອກຜົນ, ເງິນກູ້ຄວນເອົາໃຈໃສ່ ແລະ ເງິນກູ້ທີ່ບໍ່ເກີດດອກອອກຜົນ ໂດຍອີງຕາມສະຖານະການຊຳລະເງິນກູ້ ແລະ ປັດໄຈອື່ນໆ. ການຈັດແບ່ງປະເພດໜີ້ ທັງໜີ້ປົກກະຕິ (ຊັ້ນ A) ແມ່ນຈະຖືກພິຈາລະນາເປັນເງິນໃຫ້ກູ້ທີ່ເກີດດອກອອກຜົນ, ເງິນໃຫ້ກູ້ຊັ້ນຄວນເອົາໃຈໃສ່ (ຊັ້ນ B) ຖືເປັນເງິນໃຫ້ກູ້ທີ່ຄວນເອົາໃຈໃສ່, ເງິນໃຫ້ກູ້ຕໍ່າກວ່າມາດຕະຖານ (ຊັ້ນ C) ຫຼື ຊັ້ນສົງໄສຈະສູນ (ຊັ້ນ D), ຫຼື ຊັ້ນສູນ (ຊັ້ນ E) ແມ່ນຈະຖືວ່າເປັນເງິນໃຫ້ກູ້ທີ່ບໍ່ເກີດດອກອອກຜົນ.

ອີງຕາມ ທຫລ 512, ເງິນແຮລວມ ແມ່ນຫັກໃນອັດຕາສ່ວນ 0,5% ຂອງຍອດເຫຼືອເງິນໃຫ້ກູ້ຢືມທີ່ເປັນຊັ້ນປົກກະຕິ ໃນມື້ທີ່ລາຍງານ. ເຊັ່ນດຽວກັນນັ້ນ, ເງິນແຮສະເພາະ ສຳລັບເງິນໃຫ້ກູ້ຊັ້ນຄວນເອົາໃຈໃສ່, ຊັ້ນຕໍ່າກວ່າມາດຕະຖານ, ຊັ້ນສົງໄສ ແລະ ຊັ້ນສູນ ແມ່ນໃຫ້ເອົາຍອດເຫຼືອໜີ້ ທີ່ເປັນເງິນໃຫ້ກູ້ ຂອງເງິນໃຫ້ກູ້ແຕ່ລະຊັ້ນ ລົບໃຫ້ມູນຄ່າຂອງຫຼັກຊັບຄໍ້າປະກັນ (ຖ້າມີ) ໂດຍອີງຕາມລະບຽບຂອງ ທຫລ ທີ່ກຳນົດອັດຕາສ່ວນຂອງເງິນແຮຕາມອັດຕາທີ່ກຳນົດໄວ້ດັ່ງລຸ່ມນີ້:

| ການຈັດຊັ້ນໜີ້ | ຈຳນວນມື້ເກີນກຳນົດຈ່າຍ (ມື້) | ອັດຕາເງິນແຮ (%) |
|---|---|---|
| ໜີ້ປົກກະຕິ (A) | 0 – 29 ວັນ | 0,5 |
| ໜີ້ຄວນເອົາໃຈໃສ່ (B) | 30 – 89 ວັນ | 3 |
| ໜີ້ຕໍ່າກວ່າມາດຕະຖານ (C) | 90 – 179 ວັນ | 20 |
| ໜີ້ສົງໄສ (D) | 180 – 359 ວັນ | 50 |
| ໜີ້ສູນ (E) | ຫຼາຍກວ່າ 360 ວັນ | 100 |

ອັດຕາສ່ວນສູງສຸດ ຂອງຜົນປະໂຫຍດຈາກຫຼັກຊັບຄໍ້າປະກັນ ທີ່ໄດ້ຮັບອະນຸຍາດ ພາຍໃຕ້ຂໍ້ຕົກລົງ 512 ມີດັ່ງນີ້:

| ປະເພດຫຼັກຊັບ ຄໍ້າປະກັນ | ອັດຕາສ່ວນສູງສຸດ ທີ່ອະນຸຍາດ |
|---|---|
| (ກ) ເງິນຝາກກັບທະນາຄານ | |
| - ເປັນສະກຸນເງິນດຽວກັບເງິນກູ້ | 100% |
| - ບໍ່ເປັນສະກຸນເງິນດຽວ ກັບເງິນກູ້ | 95% |
| (ຂ) ຄຳທີ່ຮັກສາຢູ່ໃນທະນາຄານ | 90% |
| (ຄ) ພັນທະບັດ ລັດຖະບານ ແລະ ພັນທະບັດ ທະນາຄານກາງ. | |
| - ຖ້າເປັນສະກຸນເງິນດຽວກັບເງິນກູ້ | |
| ຖ້າມີອາຍຸຄົງເຫຼືອ ຕໍ່າກວ່າ 1 ປີ | 100% |
| ຖ້າມີອາຍຸຄົງເຫຼືອ ແຕ່ 1 ປີ ຫາ 5 ປີ | 90% |
| ຖ້າມີອາຍຸຄົງເຫຼືອ ແຕ່ 5 ປີ ຂຶ້ນໄປ | 80% |
| - ຖ້າບໍ່ເປັນສະກຸນເງິນດຽວກັບເງິນກູ້ | |
| ຖ້າມີອາຍຸຄົງເຫຼືອ ຕໍ່າກວ່າ 1 ປີ | 95% |
| ຖ້າມີອາຍຸຄົງເຫຼືອ ແຕ່ 1 ປີ ຫາ 5 ປີ | 85% |
| ຖ້າມີອາຍຸຄົງເຫຼືອ ແຕ່ 5 ປີ ຂຶ້ນໄປ | 75% |
| (ງ) ເງິນຝາກກັບທະນາຄານອື່ນ ແລະ ສະຖາບັນການເງິນອື່ນ | |
| ຖ້າມີອາຍຸຄົງເຫຼືອ ຕໍ່າກວ່າ 1 ປີ | 80% |
| ຖ້າມີອາຍຸຄົງເຫຼືອ ແຕ່ 1 ປີ ຫາ 5 ປີ | 75% |
| ຖ້າມີອາຍຸຄົງເຫຼືອ ແຕ່ 5 ປີ ຂຶ້ນໄປ | 70% |
| (ຈ) ໜັງສືສິນເຊື່ອ ຫຼື ໜັງສືສິນເຊື່ອ ແບບສຳຮອງ | 95% |
| (ສ) ໜັງສືຄໍ້າປະກັນ ຫຼື ໜັງສືຄໍ້າປະກັນທະນາຄານ | 90% |
| (ຊ) ອະສັງຫາລິມະຊັບ | 40% |

ການປ່ຽນແປງຂອງເງິນແຮສະເພາະ ແມ່ນຖືກບັນທຶກຢູ່ໃນໃບລາຍງານຜົນການ ດຳເນີນງານ "ລາຍຈ່າຍເງິນແຮສະເພາະສຸດທິ". ເງິນແຮສະເພາະສະສົມຕາມລະບຽບການ ແມ່ນຖືກບັນທຶກຢູ່ໃນໃບລາຍງານຖານະການເງິນ "ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ, ຫຼັງຫັກເງິນແຮສະເພາະ".

ອີງຕາມລະບຽບການບັນຊີທີ່ກ່ຽວຂ້ອງ ຕາມກົດໝາຍ ທະນາຄານ ແຫ່ງ ສປປ ລາວ, ການປ່ຽນແປງ ຂອງເງິນແຮ ສຳລັບກິດຈະກຳການປ່ອຍເງິນໃຫ້ກູ້ຢືມ ແມ່ນ ບັນທຶກໃນໃບລາຍງານຜົນການດຳເນີນງານ ເປັນ "ຄ່າໃຊ້ຈ່າຍໃນການດຳເນີນງານອື່ນໆ" ສຳລັບລາຍຈ່າຍເງິນແຮລວມ ແລະ "ລາຍຮັບອື່ນໆ" ສຳລັບເກັບຄືນລາຍຈ່າຍເງິນແຮລວມ. ສຳລັບການ ເກັບຄືນລາຍຈ່າຍຂອງເງິນແຮລວມ ແລະ ຍອດເຫຼືອຂອງເງິນແຮລວມ ແມ່ນບັນທຶກໃນໃບລາຍງານຖານະການເງິນໃນ "ເງິນແຮລວມສຳລັບກິດຈະກຳການປ່ອຍເງິນກູ້" ພາຍໃຕ້ທຶນ ແລະ ຄັງສຳຮອງຂອງທະນາຄານ.

**ຂໍ້ຕົກລົງ 324/ທຫລ ທີ່ນຳໃຊ້ກ່ອນ ວັນທີ 1 ຕຸລາ 2018**

ອີງຕາມຂໍ້ຕົກລົງ 324/ທຫລ ("ທຫລ 324") ວັນທີ 19 ເມສາ 2011, ທະນາຄານຕ້ອງຈັດປະເພດເງິນໃຫ້ກູ້ ແລະ ຄິດໄລ່ເງິນແຮສຳລັບໜີ້ເສຍ. ດັ່ງນັ້ນ, ເງິນໃຫ້ກູ້ ທີ່ຈັດເປັນເງິນກູ້ທີ່ເກີດດອກອອກຜົນ ແລະ ເງິນກູ້ທີ່ບໍ່ເກີດດອກອອກຜົນ ໂດຍອີງໃສ່ສະຖານະການຊຳລະຄືນ ແລະ ບັນດາປັດໄຈຄຸນນະພາບອື່ນໆ. ເງິນໃຫ້ກູ້ທີ່ຈັດເປັນຊັ້ນປົກກະຕິ (ຊັ້ນ A) ແລະ ຊັ້ນຄວນເອົາໃຈໃສ່ ຫຼື ພິຈາລະນາພິເສດ (ຊັ້ນ B) ແມ່ນຖືວ່າເປັນເງິນໃຫ້ກູ້ທີ່ເກີດດອກອອກຜົນ. ເງິນໃຫ້ກູ້ຊັ້ນຕ່ຳກວ່າມາດຕະຖານ (ຊັ້ນ C) ຫຼື ເງິນໃຫ້ກູ້ຊັ້ນສົງໄສ (ຊັ້ນ D) ຫຼື ເງິນໃຫ້ກູ້ຊັ້ນສູນ (ຊັ້ນ E) ຖືວ່າເປັນເງິນໃຫ້ກູ້ທີ່ບໍ່ເກີດດອກອອກຜົນ.

ອີງຕາມ ທຫລ 324 ເງິນແຮ ສຳລັບ ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ ຖືກສ້າງຂຶ້ນໂດຍ ການຄູນຍອດຄົງເຫຼືອຂອງແຕ່ລະບັນຊີ ກັບອັດຕາສ່ວນຂອງເງິນແຮ ໂດຍອີງຕາມຊັ້ນຂອງເງິນໃຫ້ກູ້ດັ່ງລຸ່ມນີ້:

| ການຈັດຊັ້ນໜີ້ | ຈຳນວນມື້ເກີນກຳນົດຈ່າຍ | ອັດຕາເງິນແຮ |
|---|---|---|
| ໜີ້ປົກກະຕິ (A) | 0 – 29 ວັນ | 0,5% - 1% |
| ໜີ້ຄວນເອົາໃຈໃສ່ (B) | 30 – 89 ວັນ | 3% |
| ໜີ້ຕ່ຳກວ່າມາດຕະຖານ (C) | 90 – 179 ວັນ | 20% |
| ໜີ້ສົງໄສວ່າຈະສູນ (D) | 180 – 359 ວັນ | 50% |
| ໜີ້ສູນ (E) | ຫຼາຍກວ່າ 360 ວັນ | 100% |

ການປ່ຽນແປງຂອງເງິນແຮ ສຳລັບເງິນໃຫ້ກູ້ທີ່ບໍ່ເກີດດອກອອກຜົນ ແມ່ນຖືກບັນທຶກຢູ່ໃນໃບລາຍງານຜົນການດຳເນີນງານ ເປັນ "ລາຍຈ່າຍເງິນແຮສຸດທິສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ" ເງິນແຮສຳຮອງສະສົມຕາມກົດໝາຍ ສຳລັບເງິນໃຫ້ກູ້ທີ່ບໍ່ເກີດດອກອອກຜົນ ແມ່ນບັນທຶກຢູ່ໃນໃບລາຍງານຖານະການເງິນ "ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ, ເງິນແຮສະເພາະສຸດທິ ສຳລັບເງິນໃຫ້ກູ້ຢືມທີ່ບໍ່ເກີດດອກອອກຜົນ".

ອີງຕາມລະບຽບການ ເລກທີ 324/ທຫລ ແມ່ນໄດ້ຮຽກຮ້ອງໃຫ້ທະນາຄານຕ້ອງມີເງິນແຮສຳຮອງທົ່ວໄປໃນອັດຕາ 3% ຂອງຍອດເງິນໃຫ້ກູ້ທັງໝົດຂອງໜີ້ຄວນເອົາໃຈໃສ່ ຫຼື ພິຈາລະນາພິເສດ ໃນມື້ທີ່ມີລາຍງານ ແລະ ເງິນແຮທົ່ວໄປສຳລັບເງິນໃຫ້ກູ້ປົກກະຕິ ຈະຕ້ອງຂຶ້ນກັບການແຈ້ງການຂອງ ທຫລ ໃນແຕ່ລະປີ. ສຳລັບໄລຍະເວລາກ່ອນ ວັນທີ 1 ຕຸລາ 2018 ອັດຕາເງິນແຮສຳລັບເງິນໃຫ້ກູ້ ຊັ້ນປົກກະຕິກ ແມ່ນ 0,5% ຫາ 1% ອີງຕາມລະບຽບການ ເລກທີ 242/ທຫລ ອອກໂດຍທະນາຄານແຫ່ງ ສປປ ລາວ ລົງວັນທີ 02 ເມສາ 2011. ດັ່ງນັ້ນ, ທະນາຄານໄດ້ຫັກເງິນແຮໃນອັດຕາ 0,5% ຂອງຍອດໜີ້ປົກກະຕິ.

ທະນາຄານໄດ້ປະຕິບັດຕາມລະບຽບການ 324 ທຫລ ໃນການຫັກເງິນແຮສຳລັບເງິນໃຫ້ກູ້ທົ່ວໄປ ແລະ ເງິນໃຫ້ກູ້ຊັ້ນຄວນເອົາໃຈໃສ່ ຫຼື ພິຈາລະນາພິເສດ ໃນໄລຍະກ່ອນ ວັນທີ 1 ຕຸລາ 2018.

ອີງຕາມຫຼັກການບັນຊີທີ່ກ່ຽວຂ້ອງທີ່ອອກໂດຍທະນາຄານແຫ່ງ ສປປ ລາວ ຖ້າຫາກມີການປ່ຽນແປງຂອງເງິນແຮສຳລັບກິດຈະກຳສິນເຊື່ອ ແມ່ນຕ້ອງບັນທຶກໃນໃບລາຍງານຜົນການດຳເນີນງານ “ລາຍຈ່າຍອື່ນໆໃນການດຳເນີນການ” ສຳລັບລາຍຈ່າຍເງິນແຮລວມ ແລະ “ລາຍຮັບອື່ນໆຈາກການດຳເນີນການ” ສຳລັບການເກັບເງິນຄືນລາຍຈ່າຍເງິນແຮລວມ ແລະ ຍອດເງິນແຮລວມ ແມ່ນ ບັນທຶກໃນໃບລາຍງານຖານະການເງິນໃນ “ເງິນແຮລວມສຳລັບກິດຈະກຳສິນເຊື່ອ” ພາຍໃຕ້ທຶນ ແລະ ຄັງສຳຮອງຂອງທະນາຄານ.

### (ຍ) ການລ້າງໜີ້ສູນ

ອີງຕາມ ລະບຽບການ ທຫລ 512, ເງິນໃຫ້ກູ້ຈະຖືກລ້າງອອກບໍ່ໃຫ້ກາຍ 90 ວັນ ພາຍຫຼັງຖືກຈັດປະເພດໃຫ້ເປັນໜີ້ສູນ.

ເງິນໃຫ້ກູ້ທີ່ຖືກລ້າງອອກ ແມ່ນໃຫ້ບັນທຶກຢູ່ນອກໃບສະຫຼຸບຊັບສິນບັດ ເພື່ອຕິດຕາມ ແລະ ລວບລວມ. ຈຳນວນເງິນທີ່ເກັບໄດ້ຈາກເງິນໃຫ້ກູ້ທີ່ລ້າງອອກກ່ອນໜ້ານີ້ ແລະ ລວມທັງລາຍໄດ້ຈາກການຂາຍຫຼັກຊັບຄ້ຳປະກັນຂອງເງິນໃຫ້ກູ້ເຫຼົ່ານັ້ນຈະຕ້ອງຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານເມື່ອມີການຮັບເກີດຂຶ້ນ.

### (ດ) ການຫັກເງິນແຮ ສຳລັບພາລະຜູກພັນນອກໃບສະຫຼຸບຊັບສິນບັດ

ອີງຕາມລະຫັດ BOL 512, ທະນາຄານບໍ່ຈຳເປັນຕ້ອງຫັກເງິນແຮສຳລັບພາລະຜູກພັນຢູ່ນອກໃບສະຫຼູບຊັບສິນບັດ, ເວັ້ນເສຍແຕ່ວ່າທະນາຄານໄດ້ເຮັດການຊຳລະເງິນພາຍໃຕ້ສັນຍາຮັບປະກັນແທນລູກຄ້າຂອງຕົນ, ໃນກໍລະນີທີ່ການຈ່າຍເງິນຖືກຈັດປະເພດໜີ້ ແລະ ເງິນແຮສຳລັບໜີ້ສູນ ແມ່ນຈະຕ້ອງປະຕິບັດຕາມນະໂຍບາຍການບັນຊີຕາມທີ່ໄດ້ລະບຸໄວ້ໃນບົດອະທິບາຍ 4(ຊ)

### (ຕ) ຊັບສິນບັດຄົງທີ່ມີຕົວຕົນ

ລາຍການຊັບສິນບັດຄົງທີ່ມີຕົວຕົນ ແມ່ນບັນທຶກຕາມມູນຄ່າລົບໃຫ້ຄ່າຫຼຸ້ຍຫ້ຽນສະສົມ ແລະ ການສູນເສຍມູນຄ່າສະສົມ (ຖ້າມີ) ຖ້າຫາກລາຍການຊັບສິນມີຫຼາຍຊິ້ນສ່ວນທີ່ມີອາຍຸການໃຊ້ງານຕ່າງກັນ ແມ່ນໃຫ້ແຍກແຕ່ລະລາຍການຂອງຊັບສິນບັດຄົງທີ່ມີຕົວຕົນ.

ຄ່າຫຼູ້ຍຫ້ຽນຂອງຊັບສົມບັດຄົງທີ່ມີຕົວຕົນແມ່ນບັນທຶກໃນໃບລາຍງານຜົນການດຳເນີນງານໂດຍນຳໃຊ້ຫຼັກການຫັກ ແບບສະເໝີຕົວຕາມອາຍຸການໃຊ້ງານຂອງຊັບສົມບັດນັ້ນໆ ຕາມອັດຕາສ່ວນຮ້ອຍຕໍ່ປີ ດັ່ງລຸ່ມນີ້:

| | |
|---|---|
| ອາຄານ ແລະ ສ່ວນປັບປຸງອາຄານ | 10% |
| ອຸປະກອນໃນຫ້ອງການ | 20% |
| ເຟີນິເຈີ ແລະ ອຸປະກອນຕິດຕັ້ງ | 10% |
| ພາຫະນະ | 20% |

ລາຍຈ່າຍກ່ຽວຂ້ອງກັບຊັບສົມບັດຄົງທີ່ມີຕົວຕົນ ທີ່ຖືກຮັບຮູ້ຈະເພີ່ມເຂົ້າເປັນຕົ້ນທຶນຊັບສິນໄດ້ເມື່ອເຫັນວ່າລາຍຈ່າຍ ເຫຼົ່ານັ້ນຈະເກີດປະໂຫຍດໃນອະນາຄົດ ແລະ ສາມາດເພີ່ມປະສິດທິພາບຂອງຊັບສົມບັດເດີມຂອງທະນາຄານ. ສ່ວນລາຍຈ່າຍນອກເໜືອທີ່ເກີດຂຶ້ນພາຍຫຼັງ ແມ່ນບັນທຶກເປັນລາຍຈ່າຍໃນໄລຍະທີ່ເກີດຂຶ້ນ.

ກຳໄລ ຫຼື ຂາດທຶນ ທີ່ເກີດຈາກການໝົດອາຍຸ ຫຼື ສະສາງຊັບສົມບັດຄົງທີ່ມີຕົວຕົນອອກ ແມ່ນບັນທຶກສ່ວນແຕກຕ່າງລະຫວ່າງລາຄາຄາດຄະເນສຸດທິທີ່ສະສາງອອກກັບມູນຄ່າຍັງເຫຼືອຂອງຊັບສິນນັ້ນ ແລະ ສ່ວນແຕກຕ່າງດັ່ງກ່າວ ແມ່ນໄດ້ບັນທຶກລົງໃນໃບລາຍງານຜົນການດຳເນີນງານ ຕາມວັນທີທີ່ຊັບສົມບັດດັ່ງກ່າວໝົດອາຍຸ ຫຼື ຖືກສະສາງອອກ.

ຊັບສົມບັດຄົງທີ່ມີຕົວຕົນທີ່ມີການຫັກຄ່າຫຼູ້ຍຫ້ຽນຄົບຕາມກຳນົດແລ້ວແມ່ນໄດ້ນຳສະເໜີຢູ່ໃນໃບລາຍງານຖານະການເງິນຈົນກວ່າມີການຊຳລະສະສາງ ແລະ ລ້າງອອກຈາກບັນຊີ.

## (ຖ) ຊັບສົມບັດຄົງທີ່ບໍ່ມີຕົວຕົນ

ຊອບແວຣ໌ ຄອມພິວເຕີ ແມ່ນບັນທຶກຕາມມູນຄ່າລົບໃຫ້ຄ່າເສື່ອມສະສົມ ແລະ ຄ່າສູນເສຍມູນຄ່າສະສົມ (ຖ້າມີ).

ລາຍຈ່າຍພາຍຫຼັງຂອງຊອບແວຣ໌ ຄອມພິວເຕີ ຈະເພີ່ມເຂົ້າເປັນຕົ້ນທຶນໄດ້ກໍ່ຕໍ່ເມື່ອເຫັນວ່າ ລາຍຈ່າຍນັ້ນຈະເກີດຜົນປະໂຫຍດຕໍ່ກັບທາງດ້ານເສດຖະກິດ ໃນອະນາຄົດຂອງຊັບສິນສະເພາະໃດໜຶ່ງທີ່ກ່ຽວຂ້ອງ. ທຸກຄ່າໃຊ້ຈ່າຍອື່ນທີ່ເກີດຂຶ້ນໃຫ້ຖືກເປັນລາຍຈ່າຍ.

ການຫັກຄ່າເສື່ອມ ແມ່ນບັນທຶກໃນໃບລາຍງານຜົນການດຳເນີນງານ ບົນພື້ນຖານຫັກແບບສະເໝີຕົວຕາມອາຍຸການໃຊ້ງານຂອງຊອບແວຣ໌ ຄອມພິວເຕີ. ຈາກມື້ທີ່ເລີ່ມນຳໃຊ້ຈົນຮອດວັນກ່ອນທີ່ຊັບສິນຖືກຈັດປະເພດເພື່ອຂາຍ ຫຼື ຖືກຕັດອອກຈາບັນຊີ ໂດຍມີການໃຊ້ອັດຕາຄິດໄລ່ປະຈຳປີດັ່ງນີ້:

| | |
|---|---|
| ຊັອບແວ ຄອມພິວເຕີ | 50% |

## (ທ) ເງິນຝາກຂອງລູກຄ້າ

ເງິນຝາກຈາກລູກຄ້າ ແມ່ນໄດ້ບັນທຶກຕາມມູນຄ່າຕົ້ນທຶນ

**(ນ) ການຮັບຮູ້ລາຍຮັບ**

ລາຍຮັບດອກເບ້ຍແມ່ນຮັບຮູ້ຕາມຫຼັກການຄ້າງຮັບຄ້າງຈ່າຍ. ຍົກເວັ້ນກໍລະນີທີ່ບັນຊີດັ່ງກ່າວໄດ້ກາຍເປັນບັນຊີທີ່ບໍ່ເກີດດອກອອກຜົນ. ເມື່ອບັນຊີດັ່ງກ່າວກາຍມາເປັນບັນຊີທີ່ບໍ່ເກີດດອກອອກຜົນ. ການບັນທຶກດອກເບ້ຍມາເປັນລາຍຮັບແມ່ນໃຫ້ພັກໄວ້ຈົນກວ່າຈະມີການຮັບຮູ້ເງິນສົດ. ບັນຊີລູກຄ້າທີ່ຖືກພິຈາລະນາເປັນບັນຊີທີ່ບໍ່ເກີດດອກອອກຜົນ ກໍ່ຕໍ່ເມື່ອລູກຄ້າບໍ່ມີການຊໍາລະເງິນໃນໄລຍະສາມເດືອນຂຶ້ນໄປ ອີງຕາມລະບຽບຂອງ ທຫລ.

ລາຍຮັບຄ່າທໍານຽມ ແລະ ຄ່າບໍລິການທາງການເງິນ ແມ່ນລວມມີຄ່າທໍານຽມທີ່ໄດ້ຮັບຈາກການເຄື່ອນໄຫວໂອນເງິນຕ່າງໆ, ການຊໍາລະການຊື້ຂາຍ, ການແລກປ່ຽນເງິນຕາຕ່າງປະເທດ, ໜັງສືຮັບຮອງທາງການເງິນ ແລະ ອື່ນໆ. ລາຍຮັບຄ່າທໍານຽມ ແລະ ຄ່າບໍລິການທາງການເງິນ ແມ່ນໄດ້ຮັບຮູ້ໃນໃບລາຍງານຜົນການດໍາເນີນງານຕາມຫຼັກເງິນສົດ.

**(ບ) ລາຍຈ່າຍດອກເບ້ຍ**

ລາຍຈ່າຍດອກເບ້ຍຂອງເງິນຝາກຂອງລູກຄ້າ ແລະ ທຸລະກໍາລະຫວ່າງທະນາຄານ ແລະ ຕະຫຼາດເງິນ (ໜີ້ສິນ) ແມ່ນໄດ້ຮັບຮູ້ໃນໃບລາຍງານຜົນການດໍາເນີນງານ ຕາມຫຼັກການຄ້າງຮັບຄ້າງຈ່າຍ.

**(ປ) ເງິນແຮ**

ເງິນແຮ ແມ່ນຖືກຮັບຮູ້ອີງຕາມຜົນການດໍາເນີນງານທີ່ຜ່ານມາ. ທະນາຄານມີພັນທະຕາມກົດໝາຍ ຫຼື ພັນທະທີ່ຄາດຄະເນໄວ້ ແລະ ມີຄວາມເປັນໄປໄດ້ແນ່ນອນວ່າປະໂຫຍດໃນທາງທຸລະກິດຈະຕ້ອງຖືກນໍາໃຊ້ເພື່ອຊໍາລະໜີ້ສິນດັ່ງກ່າວ. ການປະເມີນໜີ້ສິນຈະຖືກພິຈາລະນາໂດຍການຫຼຸດຂອງແສເງິນສົດກ່ອນອັດຕາອາກອນທີ່ສົ່ງຜົນກະທົບຕໍ່ມູນຄ່າເງິນໃນຕະຫຼາດ ແລະ ມີຄວາມສ່ຽງຕໍ່ໜີ້ສິນ.

**(ຜ) ພາກສ່ວນທີ່ກ່ຽວຂ້ອງ**

ພາກສ່ວນທີ່ກ່ຽວຂ້ອງ ແມ່ນຖືກພິຈາລະນາວ່າກ່ຽວຂ້ອງກັບທະນາຄານເມື່ອພາກສ່ວນດັ່ງກ່າວ ທີ່ມີຄວາມສາມາດຄວບຄຸມທາງກົງ ຫຼື ທາງອ້ອມທີ່ພົ້ນເດັ່ນ ຕໍ່ກັບພາກສ່ວນອື່ນທີ່ກ່ຽວຂ້ອງກັນກັບການຕັດສິນໃຈກ່ຽວກັບການເງິນ ແລະ ການດໍາເນີນງານ ຫຼື ທະນາຄານພ້ອມກັບພາກສ່ວນດັ່ງກ່າວ ມີການຄວບຄຸມຮ່ວມກັນ ຫຼື ມີອໍານາດທີ່ພົ້ນເດັ່ນ. ພາກສ່ວນທີ່ກ່ຽວຂ້ອງອາດເປັນບຸກຄົນ ຫຼື ບໍລິສັດ ແລະ ລວມທັງສະມາຊິກຄອບຄົວຂອງບຸກຄົນໃດໜຶ່ງທີ່ຖືວ່າເປັນພາກສ່ວນທີ່ກ່ຽວຂ້ອງ.

**(ຝ) ຜົນປະໂຫຍດຂອງພະນັກງານ**

ສິດຜົນປະໂຫຍດຫຼັງຈາກການຈ້າງງານ

ສິດຜົນປະໂຫຍດຫຼັງຈາກການຈ້າງງານ ຈະໄດ້ຮັບເງິນບໍານານຈາກພະແນກກອງທຶນປະກັນສັງຄົມ ເຊິ່ງຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ທະນາຄານໄດ້ປະກອບສ່ວນໃນການໃຫ້ສິດທິຜົນປະໂຫຍດຈາກການຈ້າງງານ ໂດຍການຈ່າຍເບ້ຍປະກັນສັງຄົມໃຫ້ກັບຫ້ອງການຕົວແທນປະກັນສັງຄົມໃນອັດຕາ 6,00% ຂອງເງິນເດືອນພື້ນຖານ (ເພດານ ສູງສຸດແມ່ນ 4.500.000 ກີບ. ອັດຕາໃໝ່ມີຜົນໃນວັນທີ 1 ມັງກອນ 2017). ທະນາຄານບໍ່ໄດ້ມີຂໍ້ຜູກມັດ ເພີ່ມເຕີມ ກັບສິດຜົນປະໂຫຍດຫຼັງຈາກການຈ້າງງານສໍາລັບພະນັກງານຂອງທະນາຄານຜົນປະໂຫຍດທີ່ໄດ້ຮັບຈາກການຍົກເລີກສັນຍາ

ອີງຕາມມາດຕາທີ 82 ຂອງກົດໝາຍ ວ່າດ້ວຍແຮງງານສະບັບປັບປຸງທີ່ອອກວັນທີ 24 ທັນວາ 2013 ໂດຍປະທານປະເທດ ຂອງ ສປປ ລາວ. ທະນາຄານມີພັນທະທີ່ຕ້ອງຈ່າຍເງິນອຸດໜູນໃຫ້ພະນັກງານທີ່ເລີກຈ້າງ ໃນກໍລະນີດັ່ງຕໍ່ໄປນີ້:

- ພະນັກງານທີ່ຂາດຄວາມຊຳນິຊຳນານພິເສດ ຫຼື ສຸຂະພາບບໍ່ແຂງແຮງ ແລະ ຫຼັງຈາກຊ່ວຍໃຫ້ປະຕິບັດງານ ໃນການດຳເນີນງານທີ່ເໝາະສົມອື່ນໆ ເພີ່ມເຕີມ ຕາມຄວາມສາມາດ ແລະ ສຸຂະພາບ ແລະ ບຸກຄົນ ດັ່ງກ່າວຍັງມີບັນຫາ ຄືຍັງບໍ່ສາມາດເຮັດວຽກຕໍ່ໄດ້.
- ນາຍຈ້າງພິຈາລະນາເຫັນວ່າມີຄວາມຈຳເປັນທີ່ຈະຕ້ອງຫຼຸດຈຳນວນພະນັກງານເພື່ອປັບປຸງ ການເຮັດວຽກໃນຫົວໜ່ວຍແຮງງານຫຼັງຈາກປຶກສາສະພາການຄ້າ ຫຼື ຕົວແທນພະນັກງານ ຫຼື ພະນັກງານສ່ວນໃຫຍ່ ແລະ ໄດ້ລາຍງານໄປຍັງໜ່ວຍງານບໍລິຫານແຮງງານ.

ສຳລັບຍົກເລີກສັນຍາແຮງງານຕາມເງື່ອນໄຂທີ່ກ່າວມາຂ້າງເທິງ. ນາຍຈ້າງຕ້ອງຈ່າຍເງິນຊົດເຊີຍໃຫ້ຜູ້ອອກແຮງງານ ທີ່ຢຸດເຊົາວຽກເຊິ່ງຄິດໄລ່ໃນເກນ 10% ຂອງເງິນເດືອນພື້ນຖານກ່ອນການຢຸດເຊົາວຽກ ຄູນດ້ວຍຈຳນວນຂອງເດືອນ ທີ່ໄດ້ເຮັດວຽກ. ວັນທີ 31 ທັນວາ 2019 ບໍ່ມີພະນັກງານທີ່ຖືກໄລ່ອອກຕາມເງື່ອນໄຂຂ້າງເທິງ. ສະນັ້ນ ທະນາຄານຈຶ່ງບໍ່ໄດ້ເກັບເງິນແຮສຳລັບເງິນອຸດໜູນການຢຸດເຊົາວຽກໃນໃບລາຍງານຖານະການເງິນ.

## (ພ) ອາກອນກຳໄລ

ລະບົບສ່ວຍສາອາກອນໃນ ສປປ ລາວ ແມ່ນຍັງໃໝ່ ແລະ ມີລັກສະນະຫຼາກຫຼາຍແບບ ແລະ ມີການປ່ຽນແປງນິຕິກຳເລື້ອຍໆ ແລະ ຂຶ້ນກັບການຕີຄວາມໝາຍ. ອາກອນ ແມ່ນຈະຖືກກວດກາ ແລະ ທົບທວນຄືນ ໂດຍເຈົ້າໜ້າທີ່ສ່ວຍສາອາກອນທີ່ແຕ່ງຕັ້ງຕາມກົດໝາຍ. ເຫດການດັ່ງກ່າວນີ້ ອາດກໍ່ໃຫ້ເກີດຄວາມສ່ຽງທາງອາກອນໃນ ສປປ ລາວ ທີ່ເປັນປະເດັນສຳຄັນຫຼາຍກວ່າປະເທດອື່ນ. ຜູ້ບໍລິຫານເຊື່ອວ່າ ໄດ້ບັນທຶກໜີ້ສິນທາງອາກອນຢ່າງພຽງພໍຕາມການຕີຄວາມໝາຍຕາມກົດໝາຍອາກອນ. ເຖິງຢ່າງໃດກໍ່ຕາມ, ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ອາດຕີຄວາມໝາຍທີ່ແຕກຕ່າງ ແລະ ອາດຈະສົ່ງຜົນກະທົບທີ່ສຳຄັນຕໍ່ທະນາຄານ. ເມື່ອສະຫຼຸບອາກອນຕ້ອງຈ່າຍເຫຼົ່ານີ້ມີສ່ວນແຕກຕ່າງຈາກຈຳນວນທີ່ໄດ້ບັນທຶກໄວ້ໃນເບື້ອງຕົ້ນ. ສ່ວນແຕກຕ່າງເຫຼົ່ານີ້ມັນຈະສົ່ງຜົນກະທົບກັບອາກອນກຳໄລ ແລະ ອາກອນເຍື້ອນຊຳລະໃນຊ່ວງເວລາດັ່ງກ່າວ ທີ່ໄດ້ມີການກຳນົດໄວ້ແລ້ວ.

ອາກອນກຳໄລໃນປະຈຸບັນ ແມ່ນຄິດໄລ່ຕາມກົດໝາຍສ່ວຍສາອາກອນ ຫຼື ຕາມບັນຍັດ ໃນວັນທີທີ່ປະກົດໃນໃບລາຍງານຖານະການເງິນ. ຜູ້ບໍລິຫານໄດ້ຕີລາຄາສະຖານະການ ທີ່ກົດໝາຍອາກອນໃນປັດຈຸບັນ ອາດມີການຕີຄວາມໝາຍທີ່ແຕກຕ່າງກັນເປັນແຕ່ລະໄລຍະ, ທັງໄດ້ມີການກະກຽມເງິນແຮໄວ້ ໃນກໍລະນີທີ່ເກີດມີຈຳນວນເງິນທີ່ຕ້ອງຈ່າຍເພີ່ມເຕີມ ໃຫ້ແກ່ກົມສ່ວຍສາອາກອນ.

ເງິນແຮສຳລັບອາກອນ ແມ່ນຄິດໄລ່ຈາກລາຍຮັບທັງໝົດ ໂດຍອີງຕາມກົດໝາຍສ່ວຍສາອາກອນຂອງ ສປປ ລາວ ສຳລັບແຕ່ລະປີທີ່ມີຜົນກຳໄລ, ທະນາຄານຈະຕ້ອງຈ່າຍອາກອນກຳໄລໃນອັດຕາ 24% ຂອງກຳໄລທາງອາກອນທັງໝົດ.

## 4. ເງິນສົດ ແລະ ທຽບເທົ່າເງິນສົດ

### (ກ) ແຍກຕາມສະກຸນເງິນ

| | ວັນທີ 31 ທັນວາ (ລ້ານກີບ) 2019 | 2018 |
|---|---|---|
| ກີບ | 73.251 | 50.208 |
| ບາດ | 35.037 | 30.449 |
| ໂດລາ | 193.720 | 495.389 |
| ຢູໂຣ | 2.768 | 4.006 |
| **ລວມ** | **304.776** | **580.052** |

b) Classified by type of cash and cash equivalents

| | ວັນທີ 31 ທັນວາ (ລ້ານກີບ) 2019 | 2018 |
|---|---|---|
| ເງິນສົດໃນຄັງ | 26.209 | 16.314 |
| ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງ ສປປ ລາວ | 153.808 | 372.830 |
| ເງິນຝາກກະແສລາຍວັນຢູ່ທະນາຄານອື່ນ | 124.759 | 190.878 |
| ເງິນຝາກປະຢັດຢູ່ທະນາຄານອື່ນ | - | 30 |
| **ລວມ** | **304.776** | **580.052** |

## 5. ເງິນຝາກແຮບັງຄັບຢູ່ທະ¬ນາ¬ຄານແຫ່ງ ສປປ ລາວ

| | ວັນທີ 31 ທັນວາ (ລ້ານກີບ) 2019 | 2018 |
|---|---|---|
| **ເງິນຝາກແຮບັງຄັບ:** | | |
| ເງິນແຮສຳຮອງ | 132.245 | 128.144 |
| ຄັງສຳຮອງທຶນຈົດທະບຽນ | 5 | 94.475 |
| **ລວມ** | **132.250** | **222.619** |

ເງິນຝາກແຮບັງຄັບຢູ່ທະນາຄານ ທຫລ ປະກອບມີ ບັນຊີຊຳລະເງິນ, ເງິນຝາກແຮບັງຄັບ ແລະ ເງິນຝາກທຶນຈົດທະບຽນ. ເງິນຝາກເຫຼົ່ານີ້ແມ່ນບໍ່ມີດອກເບ້ຍ.

ພາຍໃຕ້ກົດລະບຽບຂອງ ທຫລ, ທະນາຄານຕ້ອງໄດ້ຮັກສາເງິນສົດໄວ້ກັບ ທຫລ ໃນຮູບແບບຂອງບັນຊີເງິນຝາກແຮບັງຄັບ ໃນອັດຕາ 5% ສຳລັບເງິນກີບ ແລະ 10% ສຳລັບເງິນຕາຕ່າງປະເທດ (2018: 5% ແລະ 10%). ໃນໄລຍະ

ເວລາສອງເດືອນ ຂອງເງິນຝາກທັງໝົດຂອງລູກຄ້າທີ່ມີກຳນົດໄລຍະເວລາໜ້ອຍກວ່າ 12 ເດືອນ. ທັງສະກຸນເງິນກີບ ແລະ ເງິນຕາຕ່າງປະເທດ ຕາມລຳດັບ.

ພາຍໃນປີ, ທາງທະນາຄານໄດ້ຮັກສາເງິນຝາກແຮບັງຄັບສອດຄ່ອງກັບຂໍ້ກຳນົດຂອງ ທຫລ.

## 6. ການລົງທຶນ

| | ວັນທີ 31 ທັນວາ (ລ້ານກີບ) | |
|---|---|---|
| | 2019 | 2018 |
| ພັນທະບັດລັດຖະບານ | - | 50.347 |
| ວິສາຫະກິດ | 516 | - |
| | **516** | **50.347** |

ການລົງທຶນ ເປັນການລົງທຶນໃນພັນທະບັດລັດຖະບານທີ່ຖືໄວ້ຈົນຄົບກຳນົດ ແລະ ລົງທຶນໃນວິສາຫະກິດ, ບໍລິສັດເຄືອຂ່າຍຊຳລະສະສາງແຫ່ງຊາດລາວຈຳກັດ. ພັນທະບັດເຫຼົ່ານີ້ ມີອາຍຸຕັ້ງແຕ່ວັນທີ 24 ພຶດສະພາ 2019. ເຖິງ 25 ມິຖຸນາ ປີ 2021 ແລະ ອັດຕາດອກເບ້ຍລະຫວ່າງ 3,00% ເຖິງ 3,40%. ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2019 ພັນທະບັດລັດຖະບານກໍໄດ້ຄົບກຳນົດ.

## 7. ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ, ຫຼັງຫັກເງິນແຮສະເພາະ

| | *ບົດອະທິບາຍ* | ວັນທີ 31 ທັນວາ (ລ້ານກີບ) | |
|---|---|---|---|
| | | 2019 | 2018 |
| ເງິນໃຫ້ກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ | | 1.463.935 | 1.108.455 |
| ລົບໃຫ້ເງິນແຮສະເພາະ | 18(ຂ) | (19.303) | (15.078) |
| **ລວມ** | | **1.444.632** | **1.093.377** |

(ກ) ແຍກຕາມອາຍຸຕາມສັນຍາ

| | ວັນທີ 31 ທັນວາ (ລ້ານກີບ) | |
|---|---|---|
| | 2019 | 2018 |
| ພາຍໃນ 1 ປີ | 1.086.823 | 821.255 |
| 1 ຫາ 5 ປີ | 116.619 | 29.520 |
| ເກີນ 5 ປີ | 260.493 | 257.680 |
| **ລວມ** | **1.463.935** | **1.108.455** |

(ຂ) ແຍກຕາມສະກຸນເງິນ

| | ວັນທີ 31 ທັນວາ (ລ້ານກີບ) | |
|---|---|---|
| | 2019 | 2018 |
| ກີບ | 353.737 | 325.933 |
| ບາດ | 56.473 | 64.370 |
| ໂດລາ | 1.053.725 | 718.152 |
| **ລວມ** | **1.463.935** | **1.108.455** |

**(ຄ) ແຍກຕາມຂະແໜງເສດຖະກິດ**

| | ວັນທີ 31 ທັນວາ (ລ້ານກີບ) | |
|---|---|---|
| | 2019 | 2018 |
| ຂະແໜງການຄ້າ | 810.556 | 373.132 |
| ຂະແໜງການບໍລິການ | 246.556 | 313.314 |
| ຂະແໜງກໍ່ສ້າງ | 195.828 | 199.809 |
| ຂະແໜງການຜະລິດ | 97.930 | 45.912 |
| ຂະແໜງກະສິກຳ ແລະ ປ່າໄມ້ | 1.617 | 1.887 |
| ຂະແໜງຂົນສົ່ງ | - | 929 |
| ຂະແໜງອຸປະກອນເຕັກນິກ | 173 | 167 |
| ອື່ນໆ | 111.275 | 173.305 |
| **ລວມ** | 1.463.935 | 1.108.455 |

**(ງ) ແຍກຕາມຜົນການດຳເນີນງານ**

| | ວັນທີ 31 ທັນວາ (ລ້ານກີບ) 2019 | 2018 |
|---|---|---|
| ເງິນກູ້ປົກກະຕິ | 1.347.518 | 956.445 |
| ເງິນກູ້ຄວນເອົາໃຈໃສ່ | 73.902 | 102.554 |
| ເງິນກູ້ໜີ້ທວງຍາກ | 42.515 | 49.456 |
| | **1.463.935** | **1.108.455** |

**(ຈ) ແຍກຕາມອັດຕາດອກເບ້ຍ (ຕໍ່ປີ)**

| | ວັນທີ 31 ທັນວາ (ລ້ານກີບ) 2019 (%) | 2018 (%) |
|---|---|---|
| ກີບ | 7,00 - 18,00 | 7,00 - 16,00 |
| ບາດ | 8,50 - 12,00 | 8,50 - 12,00 |
| ໂດລາ | 6,00 - 12,00 | 6,00 - 12,00 |

## 8. ບັດຄົງທີ່ມີຕົວຕົນ

ລາຍການເຄື່ອນໄຫວຂອງຍອດຂອງຊັບສິນບັດຄົງທີ່ມີຕົວຕົນ ໃນປີສິ້ນສຸດ ວັນທີ 31 ທັນວາ 2019 ມີດັ່ງນີ້:

| | ອາຄານ ແລະ ປັບປຸງອາຄານ | ອຸປະກອນຮັບໃຊ້ຫ້ອງການ | ເຟີນີເຈີ ແລະ ເຄື່ອງປະກອບ (ລ້ານກີບ) | ພາຫະນະ | ສິ່ງປຸກສ້າງພວມດຳເນີນງານ | ລວມ |
|---|---|---|---|---|---|---|
| **ຕົ້ນທຶນ** | | | | | | |
| ຍອດຍົກມາໃນວັນທີ 1 ມັງກອນ 2019 | 7.741 | 5.977 | 1.565 | 2.373 | - | 17.656 |
| ຊື້ເຂົ້າເພີ່ມໃນປີ | 2.387 | 736 | 360 | 14 | 21.426 | 24.923 |
| ຈັດປະເພດໃໝ່ | (981) | 488 | 493 | - | - | - |
| **ຍອດເຫຼືອໃນວັນທີ 31 ທັນວາ 2019** | **9.147** | **7.201** | **2.418** | **2.387** | **21.426** | **42.579** |
| ຄ່າຫຼຸ້ຍຫ້ຽນສະສົມ | | | | | | |
| ຍອດຍົກມາໃນວັນທີ 1 ມັງກອນ 2019 | 5.271 | 3.742 | 922 | 1.852 | - | 11.787 |
| ຫັກເຂົ້າພາຍໃນປີ | 645 | 716 | 195 | 124 | - | 1.680 |
| ຈັດປະເພດໃໝ່ຂອງຄ່າຫຼຸ້ຍຫ້ຽນໃນປີ | (93) | (2) | (3) | - | - | (98) |
| **ຍອດເຫຼືອໃນວັນທີ 31 ທັນວາ 2019** | **5.823** | **4.456** | **1.114** | **1.976** | **-** | **13.369** |
| **ມູນຄ່າຍັງເຫຼືອ:** | | | | | | |
| **ໃນວັນທີ 1 ມັງກອນ 2019** | 2.470 | 2.235 | 643 | 521 | - | 5.869 |
| **ໃນວັນທີ 31 ທັນວາ 2019** | **3.324** | **2.745** | **1.304** | **411** | **21.426** | **29.210** |

ລາຍການເຄື່ອນໄຫວຂອງຍອດຂອງຊັບສົມບັດຄົງທີ່ມີຕົວຕົນ ໃນປີສິ້ນສຸດ ວັນທີ 31 ທັນວາ 2018 ມີດັ່ງນີ້:

| | ອາຄານ ແລະ ປັບປຸງອາຄານ | ອຸປະກອນຮັບໃຊ້ຫ້ອງການ | ເຟີນີເຈີ ແລະ ເຄື່ອງປະກອບ (ລ້ານກີບ) | ພາຫະນະ | ລວມ |
|---|---|---|---|---|---|
| **ຕົ້ນທຶນ** | | | | | |
| ຍອດຍົກມາໃນວັນທີ 1 ມັງກອນ 2018 | 5.686 | 3.982 | 1.118 | 1.754 | 12.540 |
| ຊື້ເຂົ້າເພີ່ມໃນປີ | 2.055 | 2.057 | 482 | 619 | 5.213 |
| ຈັດອອກຈາກບັນຊີ | - | (38) | (35) | - | (73) |
| ສະສາງອອກ | - | (24) | - | - | (24) |
| **ຍອດເຫຼືອໃນວັນທີ 31 ທັນວາ 2018** | 7.741 | 5.977 | 1.565 | 2.373 | 17.656 |
| **ຄ່າຫຼຸ້ຍຫ້ຽນສະສົມ** | | | | | |
| ຍອດຍົກມາໃນວັນທີ 1 ມັງກອນ 2018 | 4.648 | 3.369 | 853 | 1.754 | 10.624 |
| ຫັກເຂົ້າພາຍໃນປີ | 623 | 424 | 103 | 98 | 1.248 |
| ຈັດອອກຈາກບັນຊີ | - | (38) | (34) | - | (72) |
| ສະສາງອອກ | - | (13) | - | - | (13) |
| **ຍອດເຫຼືອໃນວັນທີ 31 ທັນວາ 2018** | 5.271 | 3.742 | 922 | 1.852 | 11.787 |
| **ມູນຄ່າຍັງເຫຼືອ:** | | | | | |
| **ໃນວັນທີ 1 ມັງກອນ 2018** | 1.038 | 613 | 265 | - | 1.916 |
| **ໃນວັນທີ 31 ທັນວາ 2018** | 2.470 | 2.235 | 643 | 521 | 5.869 |

## 9. ຄົງທີ່ບໍ່ມີຕົວຕົນ

ລາຍການເຄື່ອນໄຫວຂອງຍອດຂອງຊັບສົມບັດຄົງທີ່ບໍ່ມີຕົວຕົນ ປີ 2019 ມີດັ່ງນີ້:

| | ຄ່າໃຊ້ຈ່າຍກ່ອນການດຳເນີນງານ | ຊັອບແວຄອມພິວເຕີ | ສິ່ງປຸກສ້າງພວມດຳເນີນງານ (ລ້ານກີບ) | ລວມທັງໝົດ |
|---|---|---|---|---|
| **ຕົ້ນທຶນ** | | | | |
| ຍອດຍົກມາໃນວັນທີ 1 ມັງກອນ 2019 | 705 | 7.406 | - | 8.111 |
| ຊື້ເຂົ້າເພີ່ມໃນປີ | 172 | 3.164 | 44.726 | 48.062 |
| **ຍອດເຫຼືອໃນວັນທີ 31 ທັນວາ 2019** | 877 | 10.570 | 44.726 | 56.173 |
| **ຄ່າຫຼຸ້ຍຫ້ຽນສະສົມ** | | | | |
| ຍອດຍົກມາໃນວັນທີ 1 ມັງກອນ 2019 | 705 | 3.977 | - | 4.682 |
| ຫັກເຂົ້າພາຍໃນປີ | 43 | 3.044 | - | 3.087 |
| **ຍອດເຫຼືອໃນວັນທີ 31 ທັນວາ 2019** | 748 | 7.021 | - | 7.769 |
| **ມູນຄ່າຍັງເຫຼືອ:** | | | | |
| **ໃນວັນທີ 1 ມັງກອນ 2019** | - | 3.429 | - | 3.429 |
| **ໃນວັນທີ 31 ທັນວາ 2019** | 129 | 3.549 | 44.726 | 48.404 |

ລາຍການເຄື່ອນໄຫວຂອງຍອດຂອງຊັບສິນບັດຄົງທີ່ບໍ່ມີຕົວຕົນ ໃນປີສິ້ນສຸດ ວັນທີ 31 ທັນວາ 2018 ມີດັ່ງນີ້:

| | ຊັອບແວຄອມພິວເຕີ (ລ້ານກີບ) |
|---|---|
| **ຕົ້ນທຶນ** | |
| ຍອດຍົກມາໃນວັນທີ 1 ມັງກອນ 2018 | 3.252 |
| ຊື້ເຂົ້າເພີ່ມໃນປີ | 4.154 |
| **ຍອດເຫຼືອໃນວັນທີ 31 ທັນວາ 2018** | **7.406** |
| **ຄ່າເສື່ອມສະສົມ** | |
| ຍອດຍົກມາໃນວັນທີ 1 ມັງກອນ 2018 | 3.252 |
| ຫັກເຂົ້າໃນປີ | 725 |
| **ຍອດເຫຼືອໃນວັນທີ 31 ທັນວາ 2018** | **3.977** |
| **ມູນຄ່າຍັງເຫຼືອ:** | |
| **ໃນວັນທີ 1 ມັງກອນ 2018** | - |
| **ໃນວັນທີ 31 ທັນວາ 2018** | **3.429** |

## 10. ຊັບສິນອື່ນໆ

| | ວັນທີ 31 ທັນວາ (ລ້ານກີບ) 2019 | 2018 |
|---|---|---|
| ວິຊາແຊັກສຳລັບການຊຳລະສະສາງ | 365.452 | 16.560 |
| ເງິນລ່ວງໜ້າ | 10.145 | 46.921 |
| ໜີ້ຕ້ອງຮັບຈາກດອກເບ້ຍ | 1.480 | 2.829 |
| ຄ່າໃຊ້ຈ່າຍລ່ວງໜ້າ | 2.589 | 2.111 |
| ອື່ນໆ | 19.089 | 471 |
| | **398.755** | **68.892** |

## 11. ເງິນຝາກຂອງລູກຄ້າ

### (ກ) ແຍກຕາມປະເພດເງິນຝາກ

| | ວັນທີ 31 ທັນວາ (ລ້ານກີບ) 2019 | 2018 |
|---|---|---|
| Current deposits | 551.853 | 416.921 |
| Term deposits | 1.030.762 | 897.516 |
| Saving deposits | 170.453 | 183.617 |
| Daily deposits | 71.472 | 95.291 |
| Others | 7.927 | 1.715 |
| **Total** | **1.832.467** | **1.595.060** |

**(ຂ) ແຍກຕາມອາຍຸການຕາມສັນຍາ**

| | ວັນທີ 31 ທັນວາ (ລ້ານກີບ) 2019 | 2018 |
|---|---|---|
| ຕໍ່າກວ່າ 3 ເດືອນ | 801.706 | 697.544 |
| 3 ຫາ 6 ເດືອນ | 33.164 | 34.662 |
| 6 ເດືອນ ຫາ 1 ປີ | 524.074 | 477.993 |
| ເກີນ 1 ປີ | 473.523 | 384.861 |
| **ລວມ** | **1.832.467** | **1.595.060** |

**(ຂ) ແຍກຕາມສະກຸນເງິນ**

| | ວັນທີ 31 ທັນວາ (ລ້ານກີບ) 2019 | 2018 |
|---|---|---|
| ກີບ | 221.437 | 185.159 |
| ບາດ | 140.411 | 115.599 |
| ໂດລາ | 1.465.003 | 1.291.617 |
| ຢູໂຣ | 5.616 | 2.685 |
| **ລວມ** | **1.832.467** | **1.595.060** |

**(ຄ) ແຍກຕາມອັດຕາດອກເບ້ຍ (ຕໍ່ປີ)**

| | 2019 (%) | 2018 (%) |
|---|---|---|
| ເງິນຝາກລາຍວັນ | | |
| ກີບ | 0,50 | 0,50 |
| ບາດ | 0,50 | 0,50 |
| ໂດລາ | 0,50 | 0,50 |
| ເງິນຝາກປະຢັດ | | |
| ກີບ | 1,75 - 3,91 | 1,75 - 3,91 |
| ບາດ | 1,25 - 2,75 | 1,25 - 2,75 |
| ໂດລາ | 1,25 - 3,00 | 1,25 - 3,00 |
| ເງິນຝາກມີກຳນົດ | | |
| ກີບ | 3,16 – 12,65 | 3,16 - 12,65 |
| ບາດ | 3,50 - 7,00 | 3,50 - 7,50 |
| ໂດລາ | 3,50 - 8,00 | 3,50 - 8,00 |

## 12. ເງິນຝາກຈາກທະນາຄານອື່ນ

### (ກ) ແຍກຕາມປະເພດເງິນຝາກ

| | ວັນທີ 31 ທັນວາ (ລ້ານກີບ) | |
|---|---|---|
| | 2019 | 2018 |
| ເງິນຝາກກະແສລາຍວັນ | 7.410 | 4.678 |
| ເງິນຝາກມີກຳນົດ | 159.102 | 17.024 |
| ເງິນກູ້ຢືມຈາກທະນາຄານອື່ນ* | - | 13.562 |
| **ລວມ** | **166.512** | **35.264** |

*ເງິນກູ້ຢືມຈາກທະນາຄານແຫ່ງ ສປປ ລາວ ເປັນເງິນກູ້ທີ່ບໍ່ມີດອກເບ້ຍ ແລະ ຄົບກຳນົດໃນ 60 ວັນ ຫຼື ໃນວັນທີ 09 ກຸມພາ ປີ 2019 ໂດຍອີງຕາມສັນຍາເງິນກູ້ຢືມ ໄລຍະສັ້ນ ເລກທີ 4858 ໃນວັນທີ 11 ທັນວາ ປີ 2018 ລະຫວ່າງ ກົມບໍລິການ, ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານ ບີໄອຊີ ລາວ ຈຳກັດ.

### (ຂ) ແຍກຕາມອາຍຸການຕາມສັນຍາ

| | ວັນທີ 31 ທັນວາ (ລ້ານກີບ) | |
|---|---|---|
| | 2019 | 2018 |
| ຕ່ຳກວ່າ 3 ເດືອນ | 7.410 | 18.240 |
| 3 ຫາ 6 ເດືອນ | 159.102 | 8.512 |
| ເກີນ 6 ເດືອນເຖິງ 1 ປີ | - | 8.512 |
| **ລວມ** | **166.512** | **35.264** |

### (ຄ) ແຍກຕາມສະກຸນເງິນ

| | ວັນທີ 31 ທັນວາ (ລ້ານກີບ) | |
|---|---|---|
| | 2019 | 2018 |
| ກີບ | 2 | 13.562 |
| ບາດ | 3 | - |
| ໂດລາ | 166.507 | 21.702 |
| **ລວມ** | **166.512** | **35.264** |

## 13. ໜີ້ສິນອື່ນໆ

| | ວັນທີ 31 ທັນວາ (ລ້ານກີບ) 2019 | 2018 |
|---|---|---|
| ດອກເບ້ຍຕ້ອງຈ່າຍສະສົມ | 24.050 | 18.217 |
| ວິຊາແຊັກສຳລັບການຊຳລະສະສາງ | 45 | 11.224 |
| ລາຍຈ່າຍອາກອນ | 1.061 | 6.559 |
| ອື່ນໆ | 4.746 | 16.214 |
| **ລວມ** | **29.902** | **52.214** |

## 14. ທຶນຈົດທະບຽນຂອງທະນາຄານ

ທະນາຄານໄດ້ປະກອບສ່ວນ ແລະ ຊຳລະທຶນຈຳນວນ 300 ຕື້ກີບ ຕາມກຳນົດຂອງທຶນຈົດທະບຽນ ຊຶ່ງໄດ້ຈົດທະບຽນໂດຍກະຊວງອຸດສາຫະກຳ ແລະ ການຄ້າ ພາຍໃຕ້ທະບຽນວິສາຫະກິດເລກທີ 1576 ລົງວັນທີ 12 ກັນຍາ 2019.

ອີງຕາມມາດຕາ 12 ຂອງກົດໝາຍວ່າດ້ວຍທະນາຄານທຸລະກິດສະບັບປັບປຸງໃໝ່ ເລກທີ 56/ສພຊ ລົງວັນທີ 7 ທັນວາ 2018, ທະນາຄານທຸລະກິດຕ້ອງປະກອບທຶນຈົດທະບຽນຕ່ຳສຸດຈຳນວນ 500 ຕື້ກີບ, ແລະ ແຕ່ລະປີຕ້ອງໄດ້ເພີ່ມທຶນຢ່າງໜ້ອຍບໍ່ໃຫ້ຫຼຸດ 20% ໃຫ້ຄົບຖ້ວນພາຍໃນ 5 ປີ, ເຊິ່ງເລີ່ມປະຕິບັດນັບແຕ່ເດືອນກັນຍາ 2019 ເປັນຕົ້ນໄປ.

ໃນປີ 2019, ທະນາຄານບໍ່ມີການເພີ່ມທຶນ ເຊິ່ງໄດ້ຮັບອະນຸຍາດຈາກທະນາຄານ ແຫ່ງ ສປປ ລາວ ໃຫ້ເລີ່ມການເພີ່ມທຶນໃນປີ 2020 ຫາ 2023 ໂດຍອີງຕາມໜັງສືຮັງຮອງ ເລກທີ 675/ ກຄທ, ວັນທີ 05 ທັນວາ 2019.

ອີງຕາມມະຕິຕົກລົງ ລົງວັນທີ 6 ມິຖຸນາ 2019, ທະນາຄານໄດ້ປະກາດເງິນປັນຜົນຂອງກຳໄລສຳລັບປີສິ້ນສຸດວັນທີ 31 ທັນວາ 2018 ຕໍ່ຜູ້ຖືຮຸ້ນຂອງທະນາຄານ, ບໍລິສັດ ເອເຊຍລົງທຶນ ແລະ ບໍລິການດ້ານການເງິນຈຳກັດ (“AIFS”) ຈາກການຖືຮຸ້ນ 70% ຈຳນວນ 11.337.200.000 ກີບ ແລະ ບໍລິສັດໄຟຟ້າລາວ ("EDL") ຈາກການຖືຮຸ້ນ 30% ຈຳນວນ 4.858.800.000. ທະນາຄານ ໄດ້ຈ່າຍເງິນດັ່ງກ່າວໃຫ້ແກ່ AIFS ໃນວັນທີ 25 ມິຖຸນາ 2019 ແລະ ຈ່າຍເງິນໃຫ້ແກ່ EDL ໃນວັນທີ 12 ມິຖຸນາ 2019. AIFS ແລະ EDL ຮັບຜິດຊອບຕໍ່ພາສີທີ່ກ່ຽວຂ້ອງໃນການຈ່າຍເງິນປັນຜົນດັ່ງກ່າວ.

ອີງຕາມມະຕິຕົກລົງ ລົງວັນທີ 16 ມັງກອນ 2018, ທະນາຄານໄດ້ປະກາດເງິນປັນຜົນຂອງກຳໄລສຳລັບປີສິ້ນສຸດວັນທີ 31 ທັນວາ 2016 ຕໍ່ຜູ້ຖືຮຸ້ນຂອງທະນາຄານ, ບໍລິສັດ ເອເຊຍລົງທຶນ ແລະ ບໍລິການດ້ານການເງິນ ຈຳກັດຜູ້ດຽວ (“AIFS”), ໃນການຖືຮຸ້ນ 70% ຈຳນວນ 15.242.500.000 ກີບ. ໃນໄລຍະຕໍ່ມາ, ທະນາຄານໄດ້ຈ່າຍເງິນປັນຜົນໃຫ້ AIFS ໃນວັນທີ 22 ມັງກອນ 2018. AIFS ຈະຮັບຜິດຊອບອາກອນທີ່ກ່ຽວຂ້ອງກັບເງິນປັນຜົນທີ່ໄດ້ຈ່າຍໃຫ້.

## 15. ຄັງສຳຮອງຕາມກົດໝາຍ

ອີງຕາມກົດຫມາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ເລກທີ 46/ສພຊ ສະບັບວັນທີ 26 ທັນວາ 2013. ທະນາຄານຕ້ອງຮັກສາເງິນຄັງສຳຮອງຕາມລະບຽບການໃນອັດຕາ 10% ຂອງກຳໄລສຸດທິພາຍຫຼັງທີ່ໄດ້ຫັກຂາດທຶນສະສົມ. ເມື່ອຄັງສຳຮອງນີ້ມີເງິນສະສົມໄດ້ເຄິ່ງໜຶ່ງຂອງທຶນຈົດທະບຽນ. ທະນາຄານສາມາດໂຈະການຫັກເງິນເຂົ້າຄັງສຳຮອງດັ່ງກ່າວ. ເງິນແຮແມ່ນຈະຕ້ອງໄດ້ຮັບການອະນຸມັດຈາກຄະນະບໍລິຫານ.

## 16. ເງິນແຮສຳລັບກິດຈະການດ້ານສິນເຊື່ອ

### (ກ) ເງິນແຮລວມສຳລັບກິດຈະການດ້ານສິນເຊື່ອ

| | *ບົດອະທິບາຍ* | ວັນທີ 31 ທັນວາ (ລ້ານກີບ) | |
|---|---|---|---|
| | | 2019 | 2018 |
| ຍອດຍົກມາຕົ້ນປີ | | 4.782 | 12.204 |
| ເງິນແຮຫັກເຂົ້າພາຍໃນປີ | 19 | 4.784 | 4.883 |
| ເກັບຄືນເງິນແຮພາຍໃນປີ | 18 | (3.011) | (9.874) |
| ການຈັດປະເພດໃໝ່ເຂົ້າເງິນແຮສະເພາະ | | - | (2.578) |
| ຜົດດ່ຽງຈາກການຕີມູນຄ່າເງິນຕາຕ່າງປະເທດ | | 183 | 147 |
| ຍອດເຫຼືອທ້າຍປີ | | **6.738** | **4.782** |

### (ຂ) ເງິນແຮສະເພາະສຳລັບກິດຈະການດ້ານສິນເຊື່ອ

| | ວັນທີ 31 ທັນວາ (ລ້ານກີບ) | |
|---|---|---|
| | 2019 | 2018 |
| ຍອດຍົກມາຕົ້ນປີ | 15.078 | 8.298 |
| ເງິນແຮຫັກເຂົ້າໃນປີ | 92.752 | 48.763 |
| ເກັບຄືນເງິນແຮໃນປີ | (44.790) | (43.824) |
| ການຈັດປະເພດໃໝ່ຈາກເງິນແຮລວມ | - | 2.578 |
| ສະສາງໜີ້ສູນອອກ | (44.352) | (1.179) |
| ຜົດດ່ຽງຈາກການຕີມູນຄ່າເງິນຕາຕ່າງປະເທດ | 615 | 442 |
| ຍອດເຫຼືອທ້າຍປີ | **19.303** | **15.078** |

## 17. ລາຍຮັບສຸດທິຄ່າທຳນຽມ ແລະ ຄ່າບໍລິການ

| | ວັນທີ 31 ທັນວາ (ລ້ານກີບ) 2019 | 2018 |
|---|---|---|
| **ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ** | 51.174 | 4.598 |
| ຄ່າທຳນຽມໃນຂັ້ນຕອນການກູ້ຢືມ | 496 | 3.297 |
| ບໍລິການຊຳລະສະສາງ | 3.415 | 2.689 |
| ອື່ນໆ | **55.085** | **10.584** |
| **ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ** | | |
| ລາຍການເຄື່ອນໄຫວລະຫວ່າງທະນາຄານ | (1) | (67) |
| ອື່ນໆ | (2.104) | (230) |
| | (2.105) | (297) |
| **ລາຍຮັບສຸດທິຄ່າທຳນຽມ ແລະ ການບໍລິການ** | **52.980** | **10.287** |

## 18. ລາຍຮັບອື່ນໆ

| | *ບົດອະທິບາຍ* | ວັນທີ 31 ທັນວາ (ລ້ານກີບ) 2019 | 2018 |
|---|---|---|---|
| ເກັບຄືນເງິນແຮລວມ | 16(ກ) | 3.011 | 9.874 |
| ເກັບຄືນໜີ້ສູນທີ່ຖືກລ້າງອອກ | | 519 | 109 |
| ລາຍຮັບຈາກການຂາຍຊັບສິນບັດຄົງທີ່ | | - | 2 |
| ລາຍຮັບອື່ນໆ | | 2.175 | 863 |
| **ລວມ** | | **5.705** | **10.848** |

## 19. ລາຍຈ່າຍອື່ນໆ

| | *ບົດອະທິບາຍ* | ວັນທີ 31 ທັນວາ (ລ້ານກີບ) 2019 | 2018 |
|---|---|---|---|
| ລາຍຈ່າຍເງິນແຮລວມ | 16(ກ) | 4.784 | 4.883 |
| ລາຍຈ່າຍບໍລິຫານ | | 12.977 | 7.189 |
| ກອງທຶນປົກປ້ອງຜູ້ຝາກເງິນ | | 1.026 | 929 |
| ຂາດທຶນຈາກການຂາຍຊັບສິນ | | - | 2 |
| ລາຍຈ່າຍອື່ນໆ | | 187 | 104 |
| **ລວມ** | | **18.974** | **13.107** |

## 20. ລາຍຈ່າຍອາກອນກຳໄລ

ທະນາຄານແມ່ນມີໜ້າທີ່ ທີ່ຈະຕ້ອງເສຍພັນທະອາກອນກຳໄລໃນອັດຕາ 24% (2017: 24%) ຕໍ່ລາຍໄດ້ທັງໝົດກ່ອນຫັກອາກອນ ຕາມກົດໝາຍວ່າດ້ວຍການເກັບສ່ວຍສາອາກອນໃໝ່ ເລກທີ 70/ສພຊ ລົງວັນທີ 15 ທັນວາ 2015 ເຊິ່ງມີຜົນບັງຄັບໃຊ້ໃນວັນທີ 24 ພຶດສະພາ 2016.

| | *ອັດຕາ ອາກອນ %* | ວັນທີ 31 ທັນວາ (ລ້ານກີບ) 2019 | 2018 |
|---|---|---|---|
| ກຳໄລກ່ອນເສຍອາກອນ | | 2.446 | 26.640 |
| ອາກອນລາຍໄດ້ໃນອັດຕາອາກອນຕາມກົດຫມາຍ | 24 | 591 | 6.395 |
| **ລວມ** | | **591** | **6.395** |

ຄ່າໃຊ້ຈ່າຍອາກອນຂອງວິສາຫະກິດແມ່ນຄິດໄລ່ໃນອັດຕາ 24% ຕໍ່ກຳໄລໄລ່ຕາມອາກອນ. ການຄິດໄລ່ອາກອນກຳໄລແມ່ນຕ້ອງໄດ້ທົບທວນ ແລະ ຮັບຮອງຈາກເຈົ້າຫນ້າທີ່ສ່ວຍສາອາກອນ.

ອີງຕາມການແຈ້ງການຂອງກະຊວງການເງິນວ່າດ້ວຍ ການປະຕິບັດຕາມກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ, ກົດໝາຍວ່າດ້ວຍອາກອນກຳໄລ, ກົດໝາຍວ່າອາກອນຊົມໃຊ້ ເລກທີ 042/ກງ ວັນທີ 11 ກຸມພາ 2020 ໃຫ້ມີການຫຼຸດອັດຕາອາກອນກຳໄລ ສຳລັບປີການບັນຊີ 2020 ຈາກ 24% ເປັນ 20% ເຊິ່ງເລີ່ມແຕ່ວັນທີ 1 ມັງກອນ 2020.

## 21. ການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ ປະກອບດ້ວຍການເຄື່ອນໄຫວທັງໝົດທີ່ດຳເນີນງານໂດຍພາກສ່ວນອື່ນໆທີ່ກ່ຽວຂ້ອງກັບທະນາຄານ. ພາກສ່ວນທີ່ຈະກ່ຽວຂ້ອງກັບທະນາຄານຕ້ອງມີ:

(ກ) ມີພົວພັນທາງກົງ ຫຼື ທາງອ້ອມໂດຍຜ່ານພາກສ່ວນໜຶ່ງ ຫຼື ຫຼາຍພາກສ່ວນທີ່ກ່ຽວຂ້ອງ:
- ຄວບຄຸມ. ຖືກຄວບຄຸມໂດຍ ຫຼື ຢູ່ພາຍໃຕ້ການຄວບຄຸມຮ່ວມກັນກັບທະນາຄານ (ລວມມີບໍລິສັດໃຫຍ່. ບໍລິສັດຍ່ອຍ ແລະ ບໍລິສັດຍ່ອຍຂອງບໍລິສັດໃຫຍ່)
- ມີສ່ວນໄດ້ເສຍຂອງທະນາຄານທີ່ມີອິດທິພົນສູງຕໍ່ທະນາຄານ; ຫຼື
- ມີສ່ວນຮ່ວມໃນການຄວບຄຸມທະນາຄານ

(ຂ) ພາກສ່ວນທີ່ເປັນຜູ້ຮ່ວມທຶນເຊິ່ງໃນນັ້ນທະນາຄານເປັນຮຸ້ນສ່ວນ
(ຄ) ພາກສ່ວນທີ່ເປັນສະມາຊິກຄົນສຳຄັນໃນຄະນະຜູ່ບໍລິຫານຂອງທະນາຄານ ຫຼື ບໍລິສັດໃຫຍ່;
(ງ) ພາກສ່ວນທີ່ເປັນສະມາຊິກໃກ້ຊິດຕິດແທດກັບຄອບຄົວຂອງບຸກຄົນທີ່ກ່ຽວພັນກັບຂໍ້ (ກ) ຫຼື (ຄ);
(ຈ) ພາກສ່ວນທີ່ເປັນຂອງທະນາຄານຮັບການຄວບຄຸມ, ຄວບຄຸມຮ່ວມກັນ ຫຼື ມີອິດທິພົນສູງໂດຍ, ຫຼື ອຳນາດໃນການລົງຄະແນນຫຼັກທີ່ແນ່ນອນຂອງທະນາຄານໃນທາງກົງ ຫຼື ທາງອ້ອມ ຫຼື ບຸກຄົນທີ່ກ່ຽວຂ້ອງທີ່ໄດ້ສະແດງໃນຂໍ້ (ຄ) ຫຼື (ງ);
(ສ) ພາກສ່ວນທີ່ເປັນແຜນຜົນປະໂຫຍດຂອງພະນັກງານຂອງທະນາຄານ ຫຼື ທະນາຄານທີ່ກ່ຽວຂ້ອງກັບພາກສ່ວນ ທີ່ກ່ຽວຂ້ອງກັບທະນາຄານ

| **ຊື່ບໍລິສັດ/ບຸກຄົນ** | **ປະເທດທີ່ດຳເນີນທຸລະກິດ/ສັນຊາດ** | **ສາຍພົວພັນ** |
|---|---|---|
| ບໍລິສັດ ເອເຊຍລົງທຶນ ແລະ ບໍລິການທາງການເງິນ ຈຳກັດຜູ້ດຽວ (AIF) | ລາວ | ເຈົ້າຂອງລາຍໃຫຍ່ |
| ບໍລິສັດ ໄຟຟ້າລາວ | ລາວ | ເຈົ້າຂອງ |
| ທະນາຄານ ບີໄອຊີ (ກຳປູເຈຍ) ມະຫາຊົນ ຈຳກັດ | ກຳປູເຈຍ | ນິຕິບຸກຄົນທີ່ຢູ່ພາຍໃຕ້ການຄວບຄຸມຮ່ວມກັນ |
| ບໍລິສັດ ເອໄອເອຟ ບໍລິການນຳເຂົ້າ ແລະ ສົ່ງອອກວັດຖຸມີຄ່າ ຈຳກັດຜູ້ດຽວ | ລາວ | ນິຕິບຸກຄົນທີ່ຢູ່ພາຍໃຕ້ການຄວບຄຸມຮ່ວມກັນ |
| ບໍລິສັດ ອາມສ ກໍ່ສ້າງ ຈຳກັດ | ລາວ | ນິຕິບຸກຄົນທີ່ຢູ່ພາຍໃຕ້ການຄວບຄຸມຮ່ວມກັນ |
| ວິສາຫະກິດສ່ວນບຸກຄົນ ປ້ຳນ້ຳມັນກົ່ງນະກອນບໍລິການ | ລາວ | ນິຕິບຸກຄົນທີ່ຢູ່ພາຍໃຕ້ການຄວບຄຸມຮ່ວມກັນ |
| ບໍລິສັດ ເອໄອເອຟເອັສ ການຄ້າ ຈຳກັດ | ລາວ | ນິຕິບຸກຄົນທີ່ຢູ່ພາຍໃຕ້ການຄວບຄຸມຮ່ວມກັນ |
| ຮ້ານ ເອວີວ້າ ເຈວເວີລີ | ລາວ | ນິຕິບຸກຄົນທີ່ຢູ່ພາຍໃຕ້ການຄວບຄຸມຮ່ວມກັນ |

ນະໂຍບາຍລາຄາສຳລັບການເຮັດທຸລະກຳກັບພາກສ່ວນທີ່ກ່ຽວຂ້ອງໄດ້ຖືກອະທິບາຍຕື່ມອີກຕໍ່ໄປນີ້:

| **ລາຍການເຄື່ອນໄຫວ** | **ນະໂຍບາຍລາຄາ** |
|---|---|
| ລາຍຮັບດອກເບ້ຍ | ສັນຍາທີ່ຕົກລົງຮ່ວມກັນ |
| ລາຍຈ່າຍດອກເບ້ຍ | ອັດຕາຕະຫຼາດ |
| ຄ່າທຳນຽມການບໍລິຫານ | ສັນຍາທີ່ຕົກລົງຮ່ວມກັນ |

ລາຍການເຄື່ອນໄຫວທີ່ສຳຄັນ ໃນປີສິ້ນສຸດ 31 ທັນວາ 2019 ແລະ 2018 ຂອງທະນາຄານ ມີດັ່ງຕໍ່ໄປນີ້:

| | ວັນທີ 31 ທັນວາ (ລ້ານກີບ) | |
|---|---|---|
| | 2019 | 2018 |
| ລາຍຮັບດອກເບ້ຍ | 4.894 | 129 |
| ລາຍຈ່າຍດອກເບ້ຍ | (4.072) | (5.045) |
| ຄ່າທຳນຽມການບໍລິຫານ | (5.161) | (2.516) |

ຍອດຄົງເຫຼືອທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງ ພາຍໃນປີສິ້ນສຸດ 31 ທັນວາ 2019 ແລະ 2018 ຂອງທະນາຄານ ມີດັ່ງຕໍ່ໄປນີ້:

| | | ວັນທີ 31 ທັນວາ (ລ້ານກີບ) | |
|---|---|---|---|
| ພາກສ່ວນທີ່ກ່ຽວຂ້ອງ | ລາຍການເຄື່ອນໄຫວ | 2019 | 2018 |
| ບໍລິສັດ ເອເຊຍລົງທຶນ ແລະ | ເງິນຝາກກະແສລາຍວັນ | 2.496 | 285 |
| ບໍລິການ ຈຳກັດຜູ້ດຽວ (AIF) | ເງິນຝາກລາຍວັນ | 2.322 | 17.538 |
| ບໍລິສັດ ໄຟຟ້າລາວ | ເງິນຝາກກະແສລາຍວັນ | 5.467 | 41.520 |
| | ເງິນຝາກກະແສລາຍວັນຂອງ ທະນາຄານ (Vostro) | 7.394 | 4.669 |
| ທະນາຄານ ບີໄອຊີ (ກຳປູເຈຍ) | ເງິນຝາກມີກຳນົດຂອງ ທະນາຄານ (borrowing) | 159.102 | - |
| ມະຫາຊົນ ຈຳກັດ | ດອກເບ້ຍຄ້າງຈ່າຍຕ້ອງຈ່າຍ | 512 | - |
| | ເງິນຝາກກະແສລາຍວັນນຳ ທະນາຄານ (Nostro) | 2.757 | 10.420 |
| ບໍລິສັດ ເອໄອເອຟ ບໍລິການນຳເຂົ້າ ແລະ | ເງິນຝາກກະແສລາຍວັນ | 26.233 | 18.704 |
| ສົ່ງອອກວັດຖຸມີຄ່າ ຈຳກັດຜູ້ດຽວ | ເງິນຝາກປະຢັດ | 640 | 149 |
| | ເງິນຝາກມີກຳນົດ | 82.763 | 56.545 |
| ບໍລິສັດ ອາມສ ກໍ່ສ້າງ ຈຳກັດ | ດອກເບ້ຍຄ້າງຈ່າຍຕ້ອງຈ່າຍ | 1.702 | 1.408 |

| ພາກສ່ວນທີ່ກ່ຽວຂ້ອງ | ລາຍການເຄື່ອນໄຫວ | ວັນທີ 31 ທັນວາ (ລ້ານກີບ) 2019 | 2018 |
|---|---|---|---|
| | ເງິນກູ້ເບີກເກີນບັນຊີ | 64.517 | 6.553 |
| ບໍລິສັດ ອາມສ ກໍ່ສ້າງ ຈຳກັດ | ເງິນຝາກກະແສລາຍວັນ | 7 | 2 |
| | ເງິນຝາກປະຢັດ | 6.160 | 343 |
| | ເງິນຝາກມີກຳນົດ | 24.637 | 51.559 |
| | ດອກເບ້ຍຄ້າງຈ່າຍຕ້ອງຈ່າຍ | 1.164 | 1.178 |
| ວິສາຫະກິດສ່ວນບຸກຄົນ ປໍ້ານໍ້າມັນ ກົງມະກອນບໍລິການ | ເງິນຝາກກະແສລາຍວັນ | 886 | 3.011 |
| ບໍລິສັດ ເອໄອເອຟເອັສ ການຄ້າ ຈຳກັດ | ເງິນຝາກກະແສລາຍວັນ | 2 | 325 |
| | ເງິນກູ້ເບີກເກີນບັນຊີ | 137.357 | - |
| ຮ້ານ ເອວີວ້າ ເຈວເວີລີ | ເງິນຝາກກະແສລາຍວັນ | 2.267 | 1.327 |

**ຄ່າຕອບແທນແກ່ສະມາຊິກຂອງຄະນະຜູ້ອຳນວຍການ ແລະ ຄະນະບໍລິຫານມີດັ່ງນີ້**

| | ວັນທີ 31 ທັນວາ (ລ້ານກີບ) 2019 | 2018 |
|---|---|---|
| ເງິນເດືອນ | 1.008 | 3.012 |
| ເງິນບຳເນັດປະຈຳປີ | - | 305 |
| ອື່ນໆ | 86 | 274 |
| **ລວມ** | **1.094** | **3.591** |

## 22. ຂໍ້ຜູກພັນ ແລະ ໜີ້ສິນທີ່ອາດເກີດຂຶ້ນ

| | ວັນທີ 31 ທັນວາ (ລ້ານກີບ) | |
|---|---|---|
| | 2019 | 2018 |
| **ຂໍ້ຜູກພັນທາງການເງິນ:** | | |
| ການຄ້ຳປະກັນຂອງທະນາຄານ | 229.489 | 134.493 |
| ປັບປຸງສຳນັກງານ | 4.084 | 3.575 |
| ຄ່າທຳນຽມການໃຫ້ຄຳປຶກສາດ້ານການບໍລິຫານ | - | 674 |
| ເຊົ່າຫ້ອງການ | 2.157 | - |
| **ລວມ** | **235.730** | **138.742** |

## 23. ເຫດການພາຍຫຼັງມື້ປິດບັນຊີ

ນອກເຫນືອຈາກຂໍ້ມູນທີ່ໄດ້ເປີດເຜີຍໃນເອກະສານລາຍງານການເງິນ, ໃນວັນທີຂອງບົດລາຍງານສະບັບນີ້ ແມ່ນບໍ່ມີເຫດການທີ່ເກີດຂຶ້ນຫລັງຈາກວັນທີ 31 ທັນວາ 2019 ທີ່ມີຜົນກະທົບອັນສຳຄັນຕໍ່ຖານະການເງິນຂອງທະນາຄານໃນວັນທີ 31 ທັນວາ 2019.



# BIC Bank Lao Co., Ltd

Financial statements
31 December 2019